ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-07 ທັນວາ 2023
ປີທີ 12
ສະບັບທີ 948
ລາຍສັບປະດາ

## ກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງທີ 1 ເປີດຂຶ້ນຢ່າງເປັນທາງການ




(ສພຊ) ກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ໄດ້ເປີດຂຶ້ນຢ່າງເປັນທາງການ ໃນວັນທີ 5 ທັນວາ 2023 ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ຫົວຂໍ້: ເພີ່ມທະວີບົດບາດຂອງລັດຖະສະພາ ໃນການສົ່ງເສີມການຮ່ວມມືຮອບດ້ານ ລະຫວ່າງ ກຳປູເຈຍ-ລາວ-ຫວຽດນາມ ໂດຍມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ, ມີທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ, ສົມເດັດ ມະຫາ ຣັດສະເພຍທິກາ ທິພາໄດ ຄຸນ ສຸດາຣີ ປະທານສະພາແຫ່ງຊາດແຫ່ງ ລາຊະອານາຈັກກຳປູເຈຍ, ທ່ານ ເວືອງ ດິງ ເຫວ້ ປະທານສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງ 3 ປະເທດເຂົ້າຮ່ວມ.

ໂອກາດນີ້, ທ່ານ ທອງລຸນ ສີສຸລິດ ໄດ້ກ່າວສູນທອນພິດ ເຊິ່ງມີເນື້ອໃນສຳຄັນບາງຕອນວ່າ: ໃນນາມປະທານປະເທດແຫ່ງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ກໍຄື ຕາງໜ້າໃຫ້ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ, ຂໍສະແດງຄວາມຊົມເຊີຍ ຕໍ່ສາມອົງການນິຕິບັນຍັດຂອງ 3 ປະເທດ ທີ່ໄດ້ຍົກລະດັບກົນໄກການປະຊຸມ ຈາກລະດັບຫົວໜ້າກຳມາທິການຂຶ້ນເປັນລະດັບປະທານສະພາ ແລະ ໄດ້ເລືອກຫົວຂໍ້ກອງປະຊຸມທີ່ມີຄວາມ

ອ່ານຕໍ່ໜ້າ 2




## ສູນທອນພົດຂອງທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປ ລາວ ຕໍ່ພິທີເປີດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1

- ສົມເດັດ ມະຫາ ຣັດສະເພຍທິກາ ທິພະໄດ ຄູນ ສຸດາຣີ, ປະທານສະພາແຫ່ງຊາດແຫ່ງ ລາຊະອານາຈັກ ກຳປູເຈຍ ທີ່ນັບຖື!

- ພະນະທ່ານ ເວື່ອງ ດິ່ງ ເຫວະ, ປະທານສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ທີ່ນັບຖື!

- ພະນະທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປ ລາວ ທີ່ນັບຖື!



- ບັນດາທ່ານຜູ້ແທນ, ແຂກຜູ້ມີກຽດ ທ່ານຍິງ ແລະ ທ່ານຊາຍ ທີ່ຮັກແພງທັງຫຼາຍ.

ມື້ນີ້, ຂ້າພະເຈົ້າຮູ້ສຶກພາກພູມໃຈ ແລະ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ເຂົ້າຮ່ວມພິທີເປີດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1, ເຊິ່ງເປັນກອງປະຊຸມຄັ້ງປະຫວັດສາດຂອງອົງການນິຕິບັນຍັດສາມປະເທດພວກເຮົາ ທີ່ໄດ້

ອ່ານຕໍ່ໜ້າ 2

## ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ກ່າວເປີດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1

ຮຽນ: - ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;

- ສົມເດັດ ມະຫາ ຣັດສະເພຍທິກາ ທິພາໄດ ຄູນ ສຸດາຣີ, ປະທານສະພາແຫ່ງຊາດແຫ່ງ ລາຊະອານາ ຈັກກຳປູເຈຍ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;

- ພະນະທ່ານ ເວືອງ ດິ່ງ ເຫວະ, ປະທານສະພາແຫ່ງຊາດແຫ່ງ ສສ ຫວຽດນາມ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;



- ບັນດາທ່ານຜູ້ແທນ, ແຂກຜູ້ມີກຽດ, ທ່ານຍິງ ແລະ ທ່ານຊາຍທີ່ນັບຖື ແລະ ຮັກແພງທັງຫຼາຍ.

ຂ້າພະເຈົ້າ, ຂໍສະແດງຄວາມປິຕິຍິນດີຕ້ອນຮັບບັນດາທ່ານເຂົ້າສູ່ກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ໃນນາມປະທານກອງປະຊຸມຮ່ວມ, ຂ້າພະເຈົ້າຮູ້ສຶກເປັນກຽດ

ອ່ານຕໍ່ໜ້າ 4

## ປະທານສະພາແຫ່ງຊາດແຫ່ງ ສສ. ຫວຽດນາມ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ



(ສພຊ) ໂດຍຕອບສະໜອງຕາມການເຊື້ອເຊີນຂອງ ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປ ລາວ, ສະຫາຍ ເວືອງ ດິງ ເຫວະ ປະທານສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດຫວຽດນາມ ໄດ້ເດີນທາງມາຢ້ຽມຢາມເຮັດວຽກ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ເຊິ່ງໄດ້ຈັດຂຶ້ນໃນລະຫວ່າງວັນທີ 4-7 ທັນວາ 2023 ຢູ່ ສປປ ລາວ.

ວັນທີ 4 ທັນວາ 2023, ສະຫາຍ ເວືອງ ດິງ ເຫວະ ປະທານສະພາແຫ່ງຊາດ ສສ. ຫວຽດນາມ ພ້ອມດ້ວຍຄະນະ

ອ່ານຕໍ່ໜ້າ 2

## ຄະນະຜູ້ແທນສະພາແຫ່ງຊາດ ລາຊະອານາຈັກກຳປູເຈຍ ຢ້ຽມຢາມ ສປປ ລາວ ແລະ ເຂົ້າຮ່ວມກອງປະຊຸມ CLV

(ສພຊ) ໂດຍຕອບສະໜອງຕາມການເຊື້ອເຊີນຂອງ ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ, ສົມເດັດ ມະຫາ ຣັດສະເພຍທິກາ ທິພະໄດ ຄູນ ສຸດາຣີ ປະທານສະພາແຫ່ງຊາດແຫ່ງລາຊະອານາຈັກກຳປູເຈຍ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ຂອງສະພາແຫ່ງຊາດກຳປູເຈຍ ໄດ້ເດີນທາງມາຢ້ຽມຢາມ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ



ຢ່າງເປັນທາງການ ໃນລະຫວ່າງວັນທີ 2-4 ທັນວາ 2023 ແລະ ສືບຕໍ່ເຂົ້າຮ່ວມກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ເຊິ່ງຈັດຂຶ້ນໃນລະຫວ່າງ

ອ່ານຕໍ່ໜ້າ 3

## ຊົມເຊີຍກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ຢ່າງສຸດໃຈ!

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ໝາຍສຳຄັນ, ສອດຄ່ອງກັບສະພາບຄວາມເປັນຈິງຂອງ 3 ປະເທດ ທັງຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາດ້ານພື້ນຖານໂຄງລ່າງ ແລະ ການພັດທະນາເສດຖະກິດ-ສັງຄົມ ຢູ່ເຂດສາມຫຼ່ຽມພັດທະນາໃນປັດຈຸບັນ. ຂ້າພະເຈົ້າສະໜັບສະໜູນຕໍ່ອົງການນິຕິບັນຍັດຂອງສາມປະເທດ ໃນການຍົກສູງບົດບາດຂອງຕົນຂຶ້ນ ເພື່ອປະກອບສ່ວນເຂົ້າໃນການຊຸກຍູ້, ສົ່ງເສີມ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການຮ່ວມມືຕ່າງໆໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ໃນພິທີເປີດ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວວ່າ: ເພື່ອຕອບສະໜອງຕາມຈຸດປະສົງ ແລະ ຄວາມຮຽກຮ້ອງຕ້ອງການໃນການພັດທະນາເຂດສາມຫຼ່ຽມພັດທະນາ CLV, ກອງປະຊຸມສຸດຍອດຄັ້ງນີ້ຈັດຂຶ້ນພາຍໃຕ້ຫົວຂໍ້: ເພີ່ມທະວີບົດບາດຂອງລັດຖະສະພາໃນການສົ່ງເສີມການຮ່ວມມືຮອບດ້ານລະຫວ່າງ ກຳປູເຈຍ-ລາວ-ຫວຽດນາມ ພ້ອມກັນນີ້, ຍັງໄດ້ກຳນົດຫົວຂໍ້ຍ່ອຍເພື່ອລົງເລິກຄົ້ນຄວ້າປຶກສາຫາລືກັນໃນແຕ່ລະຂົງເຂດ ຄື: 1. ວຽກງານຮ່ວມມືດ້ານການເມືອງ ແລະ ການຕ່າງປະເທດ: ເພີ່ມທະວີບົດບາດຂອງລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ ໃນການຊຸກຍູ້ການຮ່ວມມື, ການເປັນຄູ່ຮ່ວມ, ຄວາມສາມັກຄີ ແລະ ຄວາມຈະເລີນຮຸ່ງເຮືອງ; 2. ວຽກງານການຮ່ວມມືດ້ານເສດຖະກິດ ແລະ ວັດທະນະທຳ-ສັງຄົມ: ເພີ່ມທະວີການຮ່ວມມືຂອງລັດຖະສະພາ ໃນການຊຸກຍູ້ການເຊື່ອມຈອດທາງດ້ານເສດຖະກິດ ຂອງກຳປູເຈຍ-ລາວ-ຫວຽດນາມ ໄປສູ່ເປົ້າໝາຍການພັດທະນາແບບຍືນຍົງ ແລະ ກວມລວມ; 3. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ເພີ່ມທະວີພາລະບົດບາດໃນການຕິດຕາມກວດກາ ຂອງລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ ຕໍ່ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນສັນຕິພາບ ແລະ ສະຖຽນລະພາບ. ນອກຈາກນີ້, ບັນດາສະມາຊິກສະພາແຫ່ງຊາດ ແລະ ຜູ້ແທນກອງປະຊຸມ ຍັງຈະໄດ້ຮັບຟັງການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານຕ່າງໆໃນເຂດສາມຫຼ່ຽມພັດທະນາຈາກພາກສ່ວນກ່ຽວຂ້ອງຂອງລັດຖະບານ, ເປັນໂອກາດແລກປ່ຽນຂໍ້ມູນ-ຂ່າວສານ, ບົດຮຽນ, ປະສົບການ, ສະແດງຄຳຄິດຄຳເຫັນຕໍ່ວຽກງານໃນທ້ອງຖິ່ນຂອງຕົນ, ແລກປ່ຽນບົດຮຽນ ແລະ ປະສົບການໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການນິຕິບັນຍັດ, ການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາຮ່ວມການມືລະຫວ່າງລັດຖະບານສາມປະເທດ.

ພ້ອມນັ້ນ, ທ່ານ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ຮຽກຮ້ອງມາຍັງຜູ້ແທນກອງປະຊຸມ ໂດຍສະເພາະບັນດາຜູ້ແທນທີ່ມາຈາກສາມຫຼ່ຽມພັດທະນາຂອງແຕ່ລະປະເທດ ເຊິ່ງເປັນຜູ້ທີ່ມີຄວາມໃກ້ຊິດຕິດແທດກັບປະຊາຊົນ ຈົ່ງເປັນເຈົ້າການໃນການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນໃສ່ແຕ່ລະບັນຫາຢ່າງສ້າງສັນ ແລະ ກົງໄປກົງມາ ເພື່ອຊອກຫາວິທີທາງ ແລະ ມາດຕະການທີ່ເໝາະສົມ ເພື່ອສະເໜີແນະຕໍ່ລັດຖະບານ; ເປັນເຈົ້າການປະກອບສ່ວນຊຸກຍູ້ການຈັດຕັ້ງປະຕິບັດດ້ານນິຕິກຳ, ການໂຄສະນາເຜີຍແຜ່ນະໂຍບາຍການລົງທຶນໃນເຂດສາມຫຼ່ຽມພັດທະນາໂດຍຜ່ານກົນໄກລັດຖະສະພາ ແລະ ອົງການລັດຖະສະພາພາກພື້ນ ແລະ ສາກົນ ເພື່ອດຶງດູດນັກລົງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ເຫັນໄດ້ທ່າແຮງທາງດ້ານເສດຖະກິດ ແລະ ມີຄວາມສົນໃຈມາລົງທຶນໃນເຂດສາມຫຼ່ຽມພັດທະນາໃຫ້ຫຼາຍຂຶ້ນ; ເອົາໃຈໃສ່ສົ່ງເສີມການຮ່ວມມືດ້ານການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ເພື່ອການພັດທະນາແບບຍືນຍົງ; ຊຸກຍູ້ການຮ່ວມມືໃນການຕ້ານ ແລະ ສະກັດກັ້ນການຄ້າມະນຸດ, ຕ້ານການອາຊະຍາກຳຂ້າມຊາດ, ຕ້ານການກໍ່ການຮ້າຍ, ເກັບກູ້ລະເບີດທີ່ບໍ່ທັນແຕກທີ່ຕົກຄ້າງຈາກສົງຄາມໃນເຂດສາມຫຼ່ຽມພັດທະນາ ແລະ ການຊອກຄົ້ນອັດຖິຂອງບັນດາທະຫານທີ່ເສຍຊີວິດ ໃນສົງຄາມຜ່ານມາກັບຄືນປະເທດ ແລະ ບັນຫາອື່ນໆ ທີ່ເປັນຄວາມສົນໃຈຂອງທັງສາມປະເທດ.

## ສູນທອນພົດ...

(ຕໍ່ຈາກໜ້າ 1)

ຈັດຂຶ້ນພາຍໃຕ້ຫົວຂໍ້: "ເພີ່ມທະວີບົດບາດຂອງລັດຖະສະພາໃນການສົ່ງເສີມການຮ່ວມມືຮອບດ້ານ ລະຫວ່າງ ກຳປູເຈຍ-ລາວ-ຫວຽດນາມ".

ໃນນາມປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຄືຕາງໜ້າໃຫ້ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ, ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ຕໍ່ສາມອົງການນິຕິບັນຍັດ ຂອງ 3 ປະເທດ ທີ່ໄດ້ຍົກລະດັບກົນໄກການປະຊຸມຈາກລະດັບຫົວໜ້າກຳມາທິການ ຂຶ້ນເປັນລະດັບປະທານສະພາ ແລະ ໄດ້ເລືອກຫົວຂໍ້ກອງປະຊຸມທີ່ມີຄວາມໝາຍສຳຄັນ, ສອດຄ່ອງກັບສະພາບຄວາມເປັນຈິງຂອງ 3 ປະເທດ ແລະ ທັງຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາດ້ານພື້ນຖານໂຄງລ່າງ ແລະ ການພັດທະນາເສດຖະກິດ-ສັງຄົມຢູ່ເຂດສາມຫຼ່ຽມພັດທະນາໃນປັດຈຸບັນ. ຂ້າພະເຈົ້າ ສະໜັບສະໜູນຕໍ່ອົງການນິຕິບັນຍັດຂອງສາມປະເທດ ໃນການຍົກສູງບົດບາດຂອງຕົນຂຶ້ນ ເພື່ອປະກອບສ່ວນເຂົ້າໃນການຊຸກຍູ້, ສົ່ງເສີມ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການຮ່ວມມືຕ່າງໆໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບັນດາທ່ານຜູ້ແທນ ທ່ານຍິງ ແລະ ທ່ານຊາຍ ທີ່ນັບຖື,

ຄືດັ່ງພວກເຮົາຮັບຮູ້ນຳກັນແລ້ວວ່າ ສາມປະເທດຂອງພວກເຮົາໄດ້ມີປະຫວັດສາດ ແລະ ມູນເຊື້ອຮ່ວມສຳພັນສູ້ຮົບອັນຍາວນານໃນການຕໍ່ສູ້ຕ້ານສັດຕູໂຕດຽວກັນ ເພື່ອເອກະລາດແຫ່ງຊາດໃນເມື່ອກ່ອນ ຈົນສາມາດຍາດໄດ້ໄຊຊະນະ ແລະ ພ້ອມກັນສ້າງສາພັດທະນາປະເທດຊາດຂອງຕົນ ເປັນກ້າວໆມາ ແລະ ສືບຕໍ່ຄຽງບ່າຄຽງໄຫຼ່, ຮ່ວມມື, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ.

ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນໃນທ່າມກາງສະພາບການຂອງພາກພື້ນ ແລະ ສາກົນ ສືບຕໍ່ມີການຜັນແປໄປຢ່າງວ່ອງໄວ, ສັບສົນ ແລະ ຄາດຄະເນໄດ້ຍາກ, ຄຽງຄູ່ກັນນັ້ນ, ບັນຫາໄພພິບັດທາງທຳມະຊາດ, ການປ່ຽນແປງຂອງດິນຟ້າອາກາດ ແລະ ຜົນກະທົບເສດຖະກິດ ຫຼັງໂຄວິດ-19 ຍັງເປັນສິ່ງທ້າທາຍທົດສອບ ຕໍ່ການພັດທະນາຂອງບັນດາປະເທດຕ່າງໆໃນໂລກ, ລວມທັງສາມປະເທດຂອງພວກເຮົາ.

ຂ້າພະເຈົ້າ ຕີລາຄາສູງຕໍ່ຂໍ້ລິເລີ່ມ ຂອງການຈັດກອງປະຊຸມສຸດຍອດລັດຖະສະພາ (CLV) ຄັ້ງທີ 1 ເຊິ່ງເປັນຄັ້ງທຳອິດທີ່ຜູ້ນຳຂັ້ນສູງຂອງສະພາແຫ່ງຊາດ ສາມປະເທດ ຈະໄດ້ຮ່ວມກັນປຶກສາຫາລື ກ່ຽວກັບການຮ່ວມມືຮອບດ້ານ ຕາມບົດບາດຂອງຕົນ ເພື່ອຊຸກຍູ້ ແລະ ຕິດຕາມກວດກາ ການປະຕິບັດບັນດາແຜນງານ, ກິດຈະກຳຕ່າງໆຂອງບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງຂອງສາມປະເທດ ໂດຍສະເພາະແມ່ນ ການດຳເນີນໂຄງການຮ່ວມມື ແລະ ການລົງທຶນຂອງລັດຖະບານສາມປະເທດ ກໍຄືໂຄງການຊ່ວຍເຫຼືອສາກົນຢູ່ໃນເຂດສາມຫຼ່ຽມພັດທະນາ (CLV) ເພື່ອແນໃສ່ເພີ່ມທະວີຄວາມສາມັກຄີ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາຢູ່ໃນເຂດດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.

ບັນດາທ່ານທີ່ນັບຖື ແລະ ຮັກແພງ,

ໄລຍະຜ່ານມາ, ເຂດສາມຫຼ່ຽມພັດທະນາ ໄດ້ປະເຊີນໜ້າກັບສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນແມ່ນບັນຫາໄພພິບັດທາງທຳມະຊາດ, ການແຜ່ລະບາດຂອງ ໂຄວິດ-19, ບັນຫາພື້ນຖານໂຄງລ່າງຊຸດໂຊມ, ບໍ່ທັນສະດວກ ແລະ ອື່ນໆ ເຊິ່ງໄດ້ສົ່ງຜົນກະທົບຫຼາຍສົມຄວນຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ຂ້າພະເຈົ້າ ຕີລາຄາສູງຕໍ່ໝາກຜົນຂອງການຮ່ວມມື, ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການຮັບມືກັບການແຜ່ລະບາດຂອງໂຄວິດ-19, ເຮັດໃຫ້ເຂດສາມຫຼ່ຽມພັດທະນາ CLV ໄດ້ມີການຟື້ນຟູເສດຖະກິດ ພາຍຫຼັງທີ່ການລະບາດຂອງພະຍາດດັ່ງກ່າວຜ່ອນຄາຍລົງ.

ຂ້າພະເຈົ້າເຫັນວ່າ ການຮ່ວມມືຢູ່ໃນເຂດສາມຫຼ່ຽມພັດທະນາ CLV ມີການເຕີບໃຫຍ່ຂະຫຍາຍຕົວຂຶ້ນເທື່ອລະກ້າວ ບົນພື້ນຖານສາຍພົວພັນມິດຕະພາບ, ຄວາມສາມັກຄີຖານເພື່ອນບ້ານໃກ້ຄຽງທີ່ດີ, ມີຄວາມເຂົ້າອົກເຂົ້າໃຈກັນ, ມີຄວາມໄວ້ເນື້ອເຊື່ອໃຈກັນ ແລະ ມີການຮ່ວມມືຮອບດ້ານນຳກັນ ຊຶ່ງເປັນການປະກອບສ່ວນສຳຄັນເຂົ້າໃນການສົ່ງເສີມການພັດທະນາເສດຖະກິດ-ສັງຄົມ, ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ແລະ ສົ່ງເສີມການເຊື່ອມໂຍງເຊື່ອມຈອດກັບພາກພື້ນ ໂດຍມີການແລກປ່ຽນການຢ້ຽມຢາມຂອງການນຳຂັ້ນຕ່າງໆ ທັງຢູ່ສູນກາງ ແລະ ທ້ອງຖິ່ນຂອງ 3 ປະເທດ ເຮັດໃຫ້ເຂດສາມຫຼ່ຽມພັດທະນາ ກາຍເປັນເຂດແຫ່ງ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາແບບຍືນຍົງ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງປະຖົມມະເລີກນີ້ ຈະເປັນໂອກາດດີ ໃຫ້ແກ່ຄະນະຜູ້ແທນສະພາແຫ່ງຊາດທັງສາມປະເທດ ໄດ້ສະແດງຄວາມຄິດຄວາມເຫັນ ແລະ ຈະໄດ້ແລກປ່ຽນທັດສະນະຮ່ວມກັນຢ່າງກົງໄປກົງມາ ຕໍ່ບັນຫາຕ່າງໆທີ່ມີຄວາມສົນໃຈ ແລະ ມີຜົນປະໂຫຍດຮ່ວມກັນ ບົນຈິດໃຈຮັດແໜ້ນຄວາມສາມັກຄີ, ມິດຕະພາບ ແລະ ການຮ່ວມມືຮອບດ້ານລະຫວ່າງສາມສະພາແຫ່ງຊາດ ກຳປູເຈຍ, ລາວ ແລະ ຫວຽດນາມ ໂດຍສະເພາະ ບັນດາແຂວງໃນເຂດສາມຫຼ່ຽມພັດທະນາ ພ້ອມກັນຊ່ວຍເຫຼືອ ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ນັບມື້ນັບມີໝາກຜົນຕົວຈິງແລະຫວັງຢ່າງຍິ່ງວ່າກອງປະຊຸມຄັ້ງນີ້ ຈະສາມາດພິຈາລະນາຮັບຮອງເອົາຖະແຫຼງການຮ່ວມຂອງກອງປະຊຸມຕາມຈຸດປະສົງທີ່ວາງໄວ້.

ສຸດທ້າຍນີ້, ຂ້າພະເຈົ້າ ຂໍອວຍພອນອັນປະເສີດ ມາຍັງສົມເດັດ ມະຫາ ຣັດສະເພຍທິກາ ທິພະໄດ ຄູນ ສຸດາຣີ ປະທານສະພາແຫ່ງຊາດແຫ່ງລາຊະອານາຈັກກຳປູເຈຍ, ພະນະທ່ານ ເວື້ອງ ດິ່ງເຫວະ ປະທານສະພາແຫ່ງຊາດແຫ່ງ ສສ. ຫວຽດນາມ, ພະນະທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປ ລາວ ແລະ ຄະນະຜູ້ແທນກອງປະຊຸມທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນສູງສົ່ງຂອງບັນດາທ່ານ.

ອວຍພອນໃຫ້ກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ນີ້ ຈົ່ງປະສົບຜົນສຳເລັດຢ່າງຈົບງາມ.

## ປະທານສະພາ...

(ຕໍ່ຈາກໜ້າ 1)

ໄດ້ວາງພວງມາລາຢູ່ອານຸສາວະລີນັກຮົບນິລະນາມ (ດາວແດງ) ແລະ ໄດ້ພົບປະທາງການກັບສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປ ລາວ ພ້ອມດ້ວຍບັນດາສະຫາຍຮອງປະທານສະພາແຫ່ງຊາດ, ບັນດາສະຫາຍຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການ, ຮອງເລຂາທິການ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນການພົບປະຄັ້ງນີ້, ໄດ້ດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນຖານສະຫາຍອ້າຍນ້ອງ ແລະ ບົນພື້ນຖານສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ກໍຄື ລະຫວ່າງ ສອງອົງການນິຕິບັນຍັດ. ໃນການພົບປະ, ສະຫາຍປະທານສະພາແຫ່ງຊາດລາວ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ຄັ້ງນີ້ ແລະ ໄດ້ແຈ້ງສະພາບການພົ້ນເດັ່ນຂອງ ສປປ ລາວ ເຊິ່ງຢູ່ໃນບັນຍາກາດສະເຫຼີມສະຫຼອງວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 48 ປີ, ທັງເປັນໄລຍະກາງສະໄໝແຫ່ງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະ ເປັນປີທີ 3 ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃນເດືອນພະຈິກຜ່ານມາ. ພ້ອມນັ້ນ, ສະຫາຍປະທານສະພາແຫ່ງຊາດລາວ ຍັງໄດ້ຕີລາຄາສູງຕໍ່ຜົນສຳເລັດຮອບດ້ານຂອງ ສສ. ຫວຽດນາມ ໃນການພັດທະນາປະເທດຊາດໃນໄລຍະຜ່ານມາ, ພິເສດ ແມ່ນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ XV.

ຈາກນັ້ນ, ສະຫາຍ ເວືອງ ດິງ ເຫວະ ປະທານສະພາແຫ່ງຊາດຫວຽດນາມ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ມາຢ້ຽມຢາມ, ເຮັດວຽກ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຢູ່ ສປປ ລາວ; ພ້ອມທັງຕີລາຄາສູງຕໍ່ກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ ກໍຄື ບົດບາດຂອງປະທານກອງປະຊຸມຂອງລາວ ແລະ ໄດ້ແຈ້ງສະພາບການພົ້ນເດັ່ນຂອງ ສສ. ຫວຽດນາມ ກໍຄືສະພາແຫ່ງຊາດຫວຽດນາມ ໃນໄລຍະຜ່ານມາ.

ໂອກາດດັ່ງກ່າວ, ສອງປະທານສະພາແຫ່ງຊາດ ໄດ້ຮ່ວມກັນຕີລາຄາຄືນການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືລະຫວ່າງ ສອງສະພາແຫ່ງຊາດລາວ-ຫວຽດນາມ ທີ່ໄດ້ລົງນາມຮ່ວມກັນໃນປີ 2022 ແລະ ເປັນເອກະພາບກັນກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ ໃນການເພີ່ມທະວີການຮ່ວມມືສອງຝ່າຍ ໂດຍຜ່ານການແລກປ່ຽນບົດຮຽນ, ຂໍ້ມູນ-ຂ່າວສານ,

ອ່ານຕໍ່ໜ້າ 3

# ນາຍົກລັດຖະມົນຕີ ລາຍງານສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນກາງສະໄໝ 5 ປີ ຄັ້ງທີ IX

ຕໍ່ຈາກສະບັບກ່ອນ...

**ພາກທີII: ທິດທາງແຜນການທ້າຍສະໄໝຮອດ ປີ 2025 ແລະ ທິດທາງແຜນການ ປະຈຳປີ 2024.**

**1.1. ທິດທາງລວມ**

ແຕ່ນີ້ຮອດທ້າຍປີ 2025 ລັດຖະບານຈະໄດ້ສືບຕໍ່ຍຶດໝັ້ນ ແລະ ຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍ ວຽກງານຈຸດສຸມທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິຂອງສະພາແຫ່ງຊາດວ່າດ້ວຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025) ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ບົນຈິດໃຈສືບຕໍ່ສ້າງການຫັນປ່ຽນໃໝ່ຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ; ຮັບປະກັນໃຫ້ປະເທດຊາດສືບຕໍ່ມີຄວາມສະຖຽນລະພາບທາງ



ດ້ານການເມືອງ, ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດ-ສັງຄົມ ສືບຕໍ່ຂະຫຍາຍຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງຕາມທິດສາມາດກຸ້ມຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອສາມາດແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໄດ້ເປັນກ້າວໆ; ຍົກສູງສະຕິປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ການພົວພັນຮ່ວມມືກັບຕ່າງປະເທດ ນັບມື້ໄດ້ຮັບການພັດທະນາຕາມທິດເຊື່ອມໂຍງ, ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໃນເງື່ອນໄຂໃໝ່ ເພື່ອສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ນີ້ຮອດປີ 2025 ແລະ ກ້າວໄປສູ່ການສ້າງ ແລະ ປະຕິບັດແຜນການ 5 ປີ ຄັ້ງທີ X (2026-2030).

**1.2. ຄາດໝາຍສູ້ຊົນ**

ສືບຕໍ່ຕັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນທີ່ກຳນົດໃນແຜນ 5 ປີ ຄັ້ງທີ IX ຕາມມະຕິຂອງສະພາ ແຫ່ງຊາດ ສະບັບເລກທີ 20/ສພຊ, ລົງວັນທີ 21 ມີນາ 2021, ໃນນັ້ນ ຈະໄດ້ສະເໜີປັບປຸງບາງຕົວເລກຄາດໝາຍຈຳນວນໜຶ່ງ.

**1.3. ວຽກງານຈຸດສຸມ**

ສືບຕໍ່ສຸມໃສ່ຊີ້ນຳການຈັດຕັ້ງປະຕິບັດບັນດາມາດຕະ

ອ່ານຕໍ່ສະບັບໜ້າ

# ການຈັດຕັ້ງປະຕິບັດແຜນເງິນຕາໃນໄລຍະກາງສະໄໝຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ

ຕໍ່ຈາກສະບັບກ່ອນ...

ທະນາຄານທົ່ວລະບົບມີຈຳນວນທັງໝົດ 40 ແຫ່ງ (ຫຼຸດລົງ 2 ແຫ່ງ ໂດຍຍຸບເລີກດ້ວຍຄວາມສະໝັກໃຈ) ໃນນີ້ມີທະນາຄານທຸລະກິດລັດ 1 ແຫ່ງ, ທະນາຄານສະເພາະກິດ 1 ແຫ່ງ, ທະນາຄານລັດຮ່ວມທຶນ 5 ແຫ່ງ, ທະນາຄານເອກະຊົນ 8 ແຫ່ງ (ໃນນີ້ມີ 1 ແຫ່ງ ຢູ່ໃນໄລຍະດຳເນີນການຂະບວນການຍຸຕິທຳ) ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານທຸລະກິດຕ່າງປະເທດ 8 ແຫ່ງ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ 17 ແຫ່ງ (ໃນນີ້ມີ 4 ທະນາຄານໄດ້ຮັບອະນຸຍາດໃຫ້ຍຸບເລີກ ດ້ວຍຄວາມສະໝັກໃຈເພື່ອສ້າງຕັ້ງເປັນທະນາຄານທຸລະກິດເຕັມຮູບແບບ ແລະ ມີ 1 ສາຂາທີ່ຢູ່ໃນຂັ້ນຕອນການຍຸບເລີກສາຂາ ເພື່ອໂຮມເຂົ້າກັນ). ນອກຈາກນີ້, ມີສາຂາ



ທະນາຄານທຸລະກິດພາຍໃນ 117 ສາຂາ(ເພີ່ມຂຶ້ນ 3 ແຫ່ງ), 550 ໜ່ວຍບໍລິການ (ເພີ່ມຂຶ້ນ 14 ໜ່ວຍ) ແລະ ຕູ້ ATM 1.502 ຕູ້ (ເພີ່ມຂຶ້ນ 68 ໜ່ວຍ) ເມື່ອທຽບໃສ່ທ້າຍປີ 2022. ໄດ້ຊຸກຍູ້ ທທກ ຈຳນວນ 27 ແຫ່ງ ໃຫ້ເພີ່ມທຶນຈົທະບຽນ ແລະ ເງິນລົງທຶນ ໃນນີ້ ສຳເລັດການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຄົບຖ້ວນ ລວມເປັນເງິນທັງໝົດ ຈຳນວນ 4.537,63 ຕື້ກີບ ກວມເອົາ 90,66% ຂອງທຶນຈົດທະບຽນ ແລະ ເງິນລົງທຶນທີ່ທະນາຄານທຸລະກິດຕ້ອງເພີ່ມທັງໝົດ.

ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ທຫລ ໄດ້ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວ ຕາມລະບຽບການຢ່າງເປັນປົກກະຕິ; ໄດ້ສ້າງນິຕິກຳ ແລະ ປັບປຸງລະບຽບການທີ່ຕິດພັນ ເພື່ອຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນທຸກຮູບແບບ ຈຳນວນ 17 ສະບັບ ໃນນັ້ນ, ພົ້ນເດັ່ນແມ່ນ ອອກດຳລັດວ່າດ້ວຍ

ອ່ານຕໍ່ສະບັບໜ້າ

## ປະທານສະພາ...

(ຕໍ່ຈາກໜ້າ 2)

ການປະສານສົມທົບກັນຕິດຕາມກວດກາການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງ ລະຫວ່າງ ສອງລັດຖະບານຂອງສອງປະເທດໄດ້ລົງນາມຮ່ວມກັນ, ສືບຕໍ່ສະໜັບສະໜູນ ແລະ ຮ່ວມມືກັນໃນການເຄື່ອນໄຫວໃນອົງການລັດຖະສະພາພາກພື້ນ ແລະ ສາກົນ; ພ້ອມກັນນີ້, ສະພາແຫ່ງຊາດຫວຽດນາມ ຍິນດີໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອສະພາແຫ່ງຊາດລາວເພື່ອເຮັດສຳເລັດໜ້າທີ່ໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ໃນປີ 2024 ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ກໍຄື ລະຫວ່າງ ສອງອົງການນິຕິບັນຍັດ.

ນອກຈາກນີ້, ສະຫາຍ ເວືອງ ດິງ ເຫວະ ຍັງໄດ້ຢ້ຽມພົບ ສະຫາຍ ບຸນຍັງ ວໍລະຈິດ ອະດີດເລຂາທິການໃຫຍ່, ອະດີດປະທານປະເທດ ແລະ ສະຫາຍ ທອງສິງ ທຳມະວົງ, ອະດີດນາຍົກລັດຖະມົນຕີ ແຫ່ງ ສປປ ລາວ; ເຂົ້າຮ່ວມງານລ້ຽງຈັດໂດຍສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ ແລະ ເຂົ້າຮ່ວມພິທີເປີດສາຍການບິນຫວຽດແຈັດ ຈາກນະຄອນຫຼວງວຽງຈັນ ສູ່ນະຄອນໂຮ່ຈິມິງ.

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ວັນທີ 4-7 ທັນວາ 2023.

ໃນວັນທີ 3 ທັນວາ 2023, ສົມເດັດ ມະຫາ ຣັດສະເພຍທິກາ ທິພະໄດ ຄູນ ສຸດາຣີ ປະທານສະພາແຫ່ງຊາດແຫ່ງລາຊະອານາຈັກກຳປູເຈຍ ພ້ອມດ້ວຍຄະນະ ໄດ້ເຂົ້າວາງພວງມາລາຢູ່ອານຸສາວະລີນັກຮົບນິລະນາມ (ດາວແດງ) ທີ່ນະຄອນຫຼວງວຽງຈັນ; ຈາກນັ້ນ, ສົມເດັດ ມະຫາ ຣັດສະເພຍທິກາ ທິພະໄດ ຄູນ ສຸດາຣີ ປະທານສະພາແຫ່ງຊາດແຫ່ງລາຊະອານາຈັກກຳປູເຈຍ ແລະ ຄະນະຜູ້ແທນຂັ້ນສູງ ໄດ້ເຂົ້າຮ່ວມພິທີຕ້ອນຮັບຢ່າງເປັນທາງການ ແລະ ສົມກຽດ ຢູ່ຕໍ່ໜ້າຫໍສະພາແຫ່ງຊາດລາວ ໂດຍມີທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປ ລາວ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ, ບັນດາທ່ານໃນຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການ, ຮອງເລຂາທິການ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ ເຂົ້າຮ່ວມໃນພິທີຕ້ອນຮັບໃນຄັ້ງນີ້. ພາຍຫຼັງພິທີຕ້ອນຮັບຢ່າງເປັນທາງການ, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ແລະ ກຳປູເຈຍ ໄດ້ດຳເນີນການພົບປະສອງຝ່າຍ ເຊິ່ງໄດ້ດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນຖານບ້ານໃກ້ເຮືອນຄຽງ ແລະ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດຮອບດ້ານ, ໝັ້ນຄົງຍາວນານ. ໃນການພົບປະສອງຝ່າຍ ທ່ານປະທານສະພາແຫ່ງຊາດລາວ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການຄັ້ງນີ້ ແລະ ໄດ້ແຈ້ງສະພາບການພົ້ນເດັ່ນຂອງ ສປປ ລາວ ເຊິ່ງຢູ່ໃນບັນຍາກາດສະເຫຼີມສະຫຼອງວັນສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 48 ປີ, ທັງເປັນໄລຍະກາງສະໄໝ ແຫ່ງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະ ເປັນປີທີ 3 ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ສະພາແຫ່ງຊາດ ຫາກໍສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງຕົນ ໃນທ້າຍເດືອນພະຈິກຜ່ານມາ.

ທ່ານປະທານສະພາແຫ່ງຊາດລາວ ຍັງໄດ້ຕີລາຄາສູງຜົນສຳເລັດຮອບດ້ານຂອງລາຊະອານາຈັກກຳປູເຈຍ ໃນການພັດທະນາປະເທດຊາດ ໃນໄລຍະຜ່ານມາ, ພິເສດ ແມ່ນຜົນສຳເລັດໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ VII ໃນເດືອນກໍລະກົດຜ່ານມາ ແລະ ການຈັດຕັ້ງລັດຖະບານໃໝ່, ການເລືອກຕັ້ງຄະນະນຳຊຸດໃໝ່ຂອງສະພາແຫ່ງຊາດກຳປູເຈຍ.

ໃນໂອກາດພົບປະສອງຝ່າຍ, ສົມເດັດ ຄູນ ສຸດາຣີ ປະທານສະພາແຫ່ງຊາດກຳປູເຈຍ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ມາຢ້ຽມຢາມ ສປປ ລາວ ເປັນຄັ້ງທຳອິດ ພາຍຫຼັງຖືກເລືອກຕັ້ງເປັນປະທານສະພາແຫ່ງຊາດກຳປູເຈຍ ເຊິ່ງທ່ານໄດ້ແຈ້ງສະພາບການອັນພົ້ນເດັ່ນຂອງລາຊະອານາຈັກກຳປູເຈຍໃນໄລຍະມໍ່ໆມານີ້. ສອງປະທານສະພາແຫ່ງຊາດ ໄດ້ຮ່ວມກັນຕີລາຄາຄືນການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມື ລະຫວ່າງ ສອງສະພາແຫ່ງຊາດລາວ-ກຳປູເຈຍ, ກຳປູເຈຍ-ລາວ ທີ່ໄດ້ເຊັນຮ່ວມກັນໃນປີ 2022 ຜ່ານມາ ແລະ ເປັນເອກະພາບກັນກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ ກໍຄື ການປະກອບສ່ວນອັນສຳຄັນເຂົ້າໃນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ສປປ ລາວ ແລະ ລາຊະອານາຈັກກຳປູເຈຍ.

ພາຍຫຼັງການພົບປະສອງຝ່າຍ ລະຫວ່າງ ສອງປະທານສະພາແຫ່ງຊາດລາວ-ກຳປູເຈຍແລ້ວ. ສອງທ່ານປະທານກຳມາທິການການຕ່າງປະເທດ, ສອງເລຂາທິການສະພາແຫ່ງຊາດ ແລະ ສອງປະທານຄະນະມິດຕະພາບລັດຖະສະພາ ລາວ-ກຳປູເຈຍ ແລະ ກຳປູເຈຍ-ລາວ ໄດ້ສືບຕໍ່ພົບປະສອງຝ່າຍ ເພື່ອປຶກສາຫາລື ແລະ ຊຸກຍູ້ເສີມຂະຫຍາຍການພົວພັນຮ່ວມມືນຳກັນ ແລະ ບັນດາເນື້ອໃນທີ່ຈະນຳມາຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ ຄັ້ງທີ 1.

ໂອກາດດຽວກັນ, ສອງປະທານສະພາແຫ່ງຊາດ ລາວ-ກຳປູເຈຍ ໄດ້ປູກຕົ້ນໄມ້ຮ່ວມກັນ. ຫຼັງຈາກນັ້ນ, ປະທານສະພາແຫ່ງຊາດກຳປູເຈຍ ຍັງໄດ້ພົບປະກັບນັກສຶກສາກຳປູເຈຍທີ່ມາສຶກສາຢູ່ ສປປ ລາວ; ຢ້ຽມຊົມຫໍພິພິທະພັນ ວຽງຈັນສິລະປະຮ່ວມສະໄໝ ແລະ ພິພິທະພັນຫັດຖະກຳແຜ່ນແພລາວ ຢູ່ນະຄອນຫຼວງວຽງຈັນ ແລະ ໃນຕອນຄ່ຳຂອງວັນດຽວກັນນັ້ນ, ທ່ານ ປະທານສະພາແຫ່ງຊາດລາວ ກໍໄດ້ເປັນເຈົ້າພາບຈັດງານລ້ຽງຕ້ອນຮັບຢ່າງເປັນທາງການ ເພື່ອເປັນກຽດແກ່ສົມເດັດ ຄູນ ສຸດາຣີ ພ້ອມດ້ວຍຄະນະຜູ້ແທນ ເຊິ່ງດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບ, ອົບອຸ່ນ ແລະ ຄວາມສາມັກຄີຮັກແພງສະໜິດສະໜົມແຕ່ຕົ້ນຕະຫຼອດປາຍ.

ໃນວັນທີ 4 ທັນວາ 2023 ສົມເດັດ ມະຫາ ຣັດສະເພຍທິກາ ທິພະໄດ ຄູນ ສຸດາຣີ ປະທານສະພາແຫ່ງຊາດແຫ່ງ ລາຊະອານາຈັກກຳປູເຈຍ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ທອງລຸນ ສີສຸລິດ ປະທານປະເທດແຫ່ງ ສປປ ລາວ ແລະ ຢ້ຽມພົບປະ ກັບທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີແຫ່ງ ສປປ ລາວ. ໃນການພົບປະດັ່ງກ່າວ, ການນຳຂັ້ນສູງທັງສອງຝ່າຍ ໄດ້ຕີລາຄາການພົວພັນຮ່ວມມືທີ່ມີມູນເຊື້ອອັນດີງາມຖານບ້ານໃກ້ເຮືອນຄຽງ, ບ້ານແກ່ວເມືອງດອງ ແລະ ຄວາມສາມັກຄີຮັກແພງຂອງສອງປະເທດ ແລະ ປະຊາຊົນສອງຊາດລາວ-ກຳປູເຈຍ. ພ້ອມດຽວກັນນັ້ນ, ການນຳ ຂອງ ສປປ ລາວ ຕາງໜ້າໃຫ້ແກ່ລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການສະໜັບສະໜູນ ແລະ ຊ່ວຍເຫຼືອຂອງລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນກຳປູເຈຍ ທີ່ມີຕໍ່ ສປປ ລາວ ທັງໃນພາລະກິດປົດປ່ອຍປະເທດຊາດ ກໍຄືໃນໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນປັດຈຸບັນ.

ພາຍຫຼັງສິ້ນສຸດການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການແລ້ວ, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດກຳປູເຈຍ ໄດ້ສືບຕໍ່ເຂົ້າຮ່ວມກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ໃນລະຫວ່າງວັນທີ 4-7 ທັນວາ 2023 ທີ່ນະຄອນຫຼວງວຽງຈັນ.

# ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດປ້ອງກັນຊາດ

ຕໍ່ຈາກສະບັບກ່ອນ...

ຂ. ຂໍ້ຫຍຸ້ງຍາກ

ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ໃນໄລຍະຜ່ານມາ ເຫັນວ່າຍັງພົບຄວາມຫຍຸ້ງຍາກບາງດ້ານ ເປັນຕົ້ນ:

- ການປະຕິບັດຫຼັກການພື້ນຖານໃນການຄຸ້ມຄອງນາຍທະຫານ, ການປະຕິບັດນະໂຍບາຍຕໍ່ນາຍທະຫານ ເປັນຕົ້ນ ກ່ຽວກັບອາຍຸກະສຽນປະດັບຊັ້ນ, ເລື່ອນຊັ້ນ, ປະດັບທຽບຊັ້ນ ໃຫ້ນາຍທະຫານແຕ່ລະຂັ້ນ



ເຫັນວ່າຍັງມີຄວາມຫຍຸ້ງຍາກ ແລະ ບໍ່ທັນໄດ້ດີເທົ່າທີ່ຄວນ;

- ການປະດັບຊັ້ນ ແລະ ປະດັບທຽບຊັ້ນ ເປັນນາຍທະຫານຕາມວຸດທິການສຶກສາ ຍັງບໍ່ທັນສອດຄ່ອງ ແລະ ເໝາະສົມກັບສະພາບຕົວຈິງ ເທົ່າທີ່ຄວນ;

- ການກຳນົດຕຳແໜ່ງບັນຊາຂອງນາຍທະຫານ ມີບາງອັນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມກົດໝາຍ ເປັນຕົ້ນແມ່ນຂັ້ນເຂດທະຫານ ແລະ ຂັ້ນກອງພົນນ້ອຍ;

- ການກຳນົດຊັ້ນໃສ່ຕຳແໜ່ງບັນຊາຂອງນາຍທະຫານ ຍັງມີລັກສະນະປົນເປກັນ, ບໍ່ທັນຄົບຖ້ວນຕາມຕຳແໜ່ງບັນຊາ, ຂອດການຈັດຕັ້ງປະຕິບັດຕົວຈິງບາງອັນບໍ່ເປັນໄປຕາມກົດໝາຍກຳນົດໄວ້.

ອ່ານຕໍ່ສະບັບໜ້າ

# ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ຕໍ່ຈາກສະບັບກ່ອນ...

- ບາງກົມກອງ ແລະ ບາງກອງບັນຊາການ ປກສ ແຂວງ ຍັງບໍ່ໃຫ້ຄວາມຮ່ວມມືໃນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໂດຍສະເພາະການສະໜອງຂໍ້ມູນ;

- ນາຍ ແລະ ພົນຕຳຫຼວດຈຳນວນໜຶ່ງ ຄວາມຮູ້, ຄວາມສາມາດ ປະສົບການ



ແລະ ບົດຮຽນຍັງຈຳກັດ, ຍັງກຳເນື້ອໃນຂອງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍບໍ່ທັນໜັກແໜ້ນ ເຮັດໃຫ້ການປະຕິບັດກົດໝາຍຍັງບໍ່ໄດ້ດີເທົ່າທີ່ຄວນ.

3. ຕໍ່ບັນຫາທີ່ຕັ້ງຂຶ້ນ

+ ບັນຫາທີ່ບໍ່ທັນໄດ້ກຳນົດໃສ່ໃນກົດໝາຍສະບັບປັດຈຸບັນ ແຕ່ຜ່ານການຈັດຕັ້ງປະຕິບັດ ເຫັນວ່າຄວນກຳນົດໃສ່ການກຳນົດເນື້ອໃນກ່ຽວກັບການກຳນົດນະໂຍບາຍເລື່ອນຊັ້ນ, ເລື່ອນຂັ້ນ, ຕຳແໜ່ງ, ອາຍຸກະສຽນ ແລະ ອື່ນໆ ຈິດໃຈສະເໜີຢາກໃຫ້ກຳນົດເປັນເອ

ອ່ານຕໍ່ສະບັບໜ້າ

## ທ່ານ ປອ. ໄຊສົມພອນ...

(ຕໍ່ຈາກໜ້າ 1)

ແລະ ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ບັນດາພະນະທ່ານປະທານ ແລະ ແຂກຜູ້ມີກຽດ ໄດ້ໃຫ້ກຽດຕອບຮັບ ແລະ ສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງປະຫວັດສາດດັ່ງກ່າວ ຕາມການເຊື້ອເຊີນຂອງຂ້າພະເຈົ້າ ແລະ ເຊື່ອໝັ້ນວ່າ ການເຂົ້າຮ່ວມ ແລະ ການປະກອບສ່ວນຢ່າງຫ້າວຫັນຂອງບັນດາທ່ານ ຈະເຮັດໃຫ້ກອງປະຊຸມສຸດຍອດຂອງພວກເຮົາໃນຄັ້ງນີ້ ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທຸກປະການ.

ບັນດາທ່ານຜູ້ແທນ, ທ່ານຍິງ ແລະ ທ່ານຊາຍ ທີ່ນັບຖື,

ດັ່ງທີ່ບັນດາທ່ານຮັບຮູ້ແລ້ວວ່າ, ກອງປະຊຸມສຸດຍອດລັດຖະສະພາ CLV ຄັ້ງນີ້ ໄດ້ຈັດຂຶ້ນໃນທ່າມກາງ ທີ່ສະພາບການຂອງພາກພື້ນ ແລະ ສາກົນສືບຕໍ່ຜັນແຜໄປຢ່າງສະຫລັບຊັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມຫຼໍ່ແຫຼມຫຼາຍດ້ານ ແລະ ມີທ່າອ່ຽງແກ່ຍາວເປັນວົງກວ້າງ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ປະເທດຕ່າງໆໃນໂລກ ລວມທັງ 3 ປະເທດຂອງພວກເຮົາ, ສປປ ລາວ ກໍພວມປະເຊີນໜ້າກັບຄວາມທຸກຍາກດ້ານເສດຖະກິດ-ການເງິນ, ເກີດມີບັນຫາເງິນເຟີ້, ລາຄານ້ຳມັນຂຶ້ນສູງ ຊີວິດການເປັນຢູ່ຂອງປະຊາຊົນມີຄວາມຫຍຸ້ງຍາກຢ່າງຫຼີກລ້ຽງບໍ່ໄດ້.

ໃນທ່າມກາງສະພາບການທີ່ມີຄວາມອ່ອນໄຫວຄືດັ່ງກ່າວ, ມີຄວາມຈຳເປັນຢ່າງຍິ່ງທີ່ສາມປະເທດ CLV ຂອງພວກເຮົາ ຕ້ອງເພີ່ມທະວີການຮ່ວມມືກັນຢ່າງສະໜິດແໜ້ນ ເພື່ອຊອກຫາວິທີທາງແກ້ໄຂບັນຫາ ເພື່ອສາມາດຮັບມືກັບສິ່ງທ້າທາຍນາໆປະການ, ພ້ອມກັນສືບຕໍ່ນຳໃຊ້ທ່າແຮງທີ່ມີຂອງ 3 ປະເທດ ໃຫ້ເກີດຜົນປະໂຫຍດສູງສຸດແກ່ປະຊາຊົນໃນເຂດສາມຫຼ່ຽມພັດທະນາ CLV ຢ່າງແທ້ຈິງ.

ບັນດາທ່ານຜູ້ແທນ ທ່ານຍິງ ແລະ ທ່ານຊາຍ ທີ່ນັບຖື.

ກອງປະຊຸມຄັ້ງປະຫວັດສາດນີ້ ເປັນການຍົກລະດັບກົນໄກການປະຊຸມ ຈາກຂັ້ນກຳມາທິການຕ່າງໆຂອງສະພາແຫ່ງຊາດສາມປະເທດ (CLV) ຂຶ້ນເປັນກອງປະຊຸມສຸດຍອດລັດຖະສະພາ ແນໃສ່ເພີ່ມທະວີ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ, ຄວາມສາມັກຄີຢ່າງແໜ້ນແຟ້ນ ແລະ ຮ່ວມມືຮອບດ້ານ, ໂດຍສຸມໃສ່ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ, ການຮ່ວມມືວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພົວພັນດ້ານວັດທະນະທຳ ແລະ ສັງຄົມ, ການພົວພັນລະຫວ່າງປະຊາຊົນກັບປະຊາຊົນ ເພື່ອການພັດທະນາແບບຍືນຍົງ ລະຫວ່າງສາມປະເທດ ແລະ ຢູ່ໃນພາກພື້ນ. ພ້ອມກັນນີ້, ກໍເພື່ອຍົກສູງບົດບາດຂອງສະພາແຫ່ງຊາດໃນການຊຸກຍູ້ສົ່ງເສີມ ແລະ ຕິດຕາມກວດກາໃນການຈັດຕັ້ງປະຕິບັດບັນດາສັນຍາ, ແຜນງານ ແລະ ໂຄງການຮ່ວມມືຕ່າງໆ ເຊິ່ງລັດຖະບານຂອງສາມປະເທດໄດ້ລົງນາມຮ່ວມກັນ ກໍຄືສັນຍາຫຼາຍຝ່າຍ ເຊິ່ງທັງສາມປະເທດເປັນພາຄີ; ເພື່ອສ້າງເປັນເວທີໃຫ້ສະມາຊິກສະພາແຫ່ງຊາດຂອງສາມປະເທດໄດ້ມີການແລກປ່ຽນຂໍ້ມູນຂ່າວສານ, ປະສົບການ, ບົດຮຽນ ແລະ ພຶດທິກຳທີ່ດີກ່ຽວກັບການປະຕິບັດໜ້າທີ່ ແລະ ພາລະບົດບາດ ຂອງສາມສະພາແຫ່ງຊາດ CLV; ພ້ອມທັງຮ່ວມກັນປຶກສາຫາລື ກ່ຽວກັບການຈັດສັນງົບປະມານ ແລະ ການຄົ້ນຄວ້າຊ່ອງທາງໃນການລະດົມທຶນຈາກພາຍໃນ ແລະ ຄູ່ຮ່ວມພັດທະນາສາກົນຂອງ CLV ແລະ ການຮ່ວມມືໃນຂົງເຂດອື່ນໆ.

ຂ້າພະເຈົ້າຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ຄວາມພະຍາຍາມຂອງລັດຖະບານສາມປະເທດ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ແຜນງານ ແລະ ໂຄງການຮ່ວມມືຕ່າງໆ ໃນໄລຍະຜ່ານມາ ດ້ວຍຜົນສຳເລັດໃນຫຼາຍດ້ານ ເຊິ່ງເປັນການສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວຢູ່ເຂດສາມຫຼ່ຽມພັດທະນາ. ພ້ອມກັນນີ້, ຂ້າພະເຈົ້າຕີລາຄາສູງຕໍ່ລັດຖະບານ ກໍຄືອຳນາດການປົກຄອງທ້ອງຖິ່ນຂອງ 3 ປະເທດ ທີ່ໄດ້ເອົາໃຈໃສ່ປະສານງານ ແລະ ປຶກສາຫາລືຮ່ວມກັນຢ່າງເປັນປົກກະຕິຕໍ່ກັບການຮ່ວມມືທາງດ້ານຄວາມໝັ້ນຄົງ ຢູ່ບໍລິເວນເຂດຊາຍແດນ ແລະ ແກ້ໄຂບັນຫາປະກົດການຫຍໍ້ທໍ້ຕ່າງໆທາງສັງຄົມ ເປັນຕົ້ນ: ຢາເສບຕິດ, ການຄ້າມະນຸດ, ຄ້າຂາຍເຖື່ອນທີ່ຜິດກົດໝາຍ ແລະ ອາດຊະຍາກຳຂ້າມຊາດ ລວມທັງການຮ່ວມມືເກັບກູ້ລະເບີດທີ່ຍັງບໍ່ທັນແຕກ ແລະ ຕົກຄ້າງແຕ່ປາງສົງຄາມ ທີ່ເປັນໄພຂົ່ມຂູ່ ຕໍ່ການດຳລົງຊີວິດຂອງປະຊາຊົນແລະການພັດທະນາເສດຖະກິດ-ສັງຄົມ.

ຂ້າພະເຈົ້າ, ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງການລົງຕິດຕາມກວດກາຮ່ວມລະຫວ່າງສະພາແຫ່ງຊາດຂອງ 3 ປະເທດໃນລະຫວ່າງວັນທີ 17-21 ຕຸລາ 2023 ຜ່ານມາ ເຊິ່ງເປັນກົນໄກການຕິດຕາມກວດກາຮ່ວມກັນຄັ້ງທຳອິດ ແລະ ໄດ້ຮັບການຮ່ວມມືຈາກອຳນາດການປົກຄອງບັນດາແຂວງ ໃນຂົງເຂດສາມຫຼ່ຽມ ແລະ ຂະແໜງການກ່ຽວຂ້ອງຂອງລັດຖະບານຂອງທັງ 3 ປະເທດເປັນຢ່າງດີ; ເຊິ່ງຜົນສຳເລັດຂອງການຕິດຕາມກວດກາຄັ້ງນັ້ນ ຈະເປັນຂໍ້ມູນພື້ນຖານໃຫ້ແກ່ການຄົ້ນຄວ້າປຶກສາຫາລື ແລະ ປະກອບຄຳເຫັນ ເພື່ອຊອກຫາວິທີທາງແກ້ໄຂບັນຫາຮ່ວມກັນ ໃຫ້ທັນການ.

ເພື່ອຕອບສະໜອງຕາມຈຸດປະສົງ ແລະ ຄວາມຮຽກຮ້ອງຕ້ອງການໃນການພັດທະນາເຂດສາມຫຼ່ຽມພັດທະນາ CLV, ກອງປະຊຸມສຸດຍອດຄັ້ງນີ້ຈັດຂຶ້ນພາຍໃຕ້ຫົວຂໍ້: ເພີ່ມທະວີບົດບາດຂອງລັດຖະສະພາໃນການສົ່ງເສີມການຮ່ວມມືຮອບດ້ານລະຫວ່າງ ກຳປູເຈຍ-ລາວ-ຫວຽດນາມ ພ້ອມກັນນີ້, ຍັງໄດ້ກຳນົດຫົວຂໍ້ຍ່ອຍເພື່ອລົງເລິກຄົ້ນຄວ້າປຶກສາຫາລືກັນໃນແຕ່ລະຂົງເຂດ ຄື:

1. ວຽກງານຮ່ວມມືດ້ານການເມືອງ ແລະ ການຕ່າງປະເທດ: ເພີ່ມທະວີບົດບາດຂອງລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ ໃນການຊຸກຍູ້ການຮ່ວມມື, ການເປັນຄູ່ຮ່ວມ, ຄວາມສາມັກຄີ ແລະ ຄວາມຈະເລີນຮຸ່ງເຮືອງ;

2. ວຽກງານການຮ່ວມມືດ້ານເສດຖະກິດ ແລະ ວັດທະນະທຳ-ສັງຄົມ: ເພີ່ມທະວີການຮ່ວມມືຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດທາງດ້ານເສດຖະກິດ ຂອງກຳປູເຈຍ-ລາວ-ຫວຽດນາມ ໄປສູ່ເປົ້າໝາຍການພັດທະນາແບບຍືນຍົງ ແລະ ກວມລວມ;

3. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ເພີ່ມທະວີພາລະບົດບາດໃນການຕິດຕາມກວດກາ ຂອງລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ ຕໍ່ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນສັນຕິພາບ ແລະ ສະຖຽນລະພາບ.

ນອກຈາກນີ້, ບັນດາສະມາຊິກສະພາແຫ່ງຊາດ ແລະ ຜູ້ແທນກອງປະຊຸມ ຍັງຈະໄດ້ຮັບຟັງການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານຕ່າງໆ ໃນເຂດສາມຫຼ່ຽມພັດທະນາ ຈາກພາກສ່ວນກ່ຽວຂ້ອງຂອງລັດຖະບານ, ເປັນໂອກາດແລກປ່ຽນຂໍ້ມູນ-ຂ່າວສານ, ບົດຮຽນ, ປະສົບການ ແລະ ສະແດງຄຳຄິດຄຳເຫັນຕໍ່ວຽກງານໃນທ້ອງຖິ່ນຂອງຕົນ ແລະ ແລກປ່ຽນບົດຮຽນ ແລະ ປະສົບການໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການນິຕິບັນຍັດ, ການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາຮ່ວມການມື ລະຫວ່າງລັດຖະບານສາມປະເທດ.

ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງຜູ້ແທນກອງປະຊຸມ ໂດຍສະເພາະບັນດາຜູ້ແທນທີ່ມາຈາກສາມ ຫຼ່ຽມພັດທະນາຂອງແຕ່ລະປະເທດ, ຊຶ່ງເປັນຜູ້ທີ່ມີຄວາມໃກ້ຊິດຕິດແທດກັບປະຊາຊົນ ຈົ່ງເປັນເຈົ້າການໃນການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນໃສ່ແຕ່ລະບັນຫາຢ່າງສ້າງສັນ ແລະ ກົງໄປກົງມາ ເພື່ອຊອກຫາວິທີທາງ ແລະ ມາດຕະການທີ່ເໝາະສົມ ເພື່ອສະເໜີແນະຕໍ່ລັດຖະບານ; ເປັນເຈົ້າການປະກອບສ່ວນຊຸກຍູ້ການຈັດຕັ້ງປະຕິບັດດ້ານນິຕິກຳ, ການໂຄສະນາເຜີຍແຜ່ນະໂຍບາຍການລົງທຶນໃນເຂດສາມຫຼ່ຽມພັດທະນາໂດຍຜ່ານກົນໄກລັດຖະສະພາ ແລະ ອົງການລັດຖະສະພາພາກພື້ນ ແລະ ສາກົນ ເພື່ອດຶງດູດນັກລົງທຶນພາຍໃນ ແລະ ຕ່າງປະເທດໃຫ້ເຫັນໄດ້ທ່າແຮງທາງດ້ານເສດຖະກິດ ແລະ ມີຄວາມສົນໃຈມາລົງທຶນໃນເຂດສາມຫຼ່ຽມພັດທະນາ ໃຫ້ຫຼາຍຂຶ້ນ; ເອົາໃຈໃສ່ສົ່ງເສີມການຮ່ວມມືດ້ານການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ເພື່ອການພັດທະນາແບບຍືນຍົງ, ຊຸກຍູ້ການຮ່ວມມືໃນການຕ້ານ ແລະ ສະກັດກັ້ນການຄ້າມະນຸດ, ຕ້ານການອາດຊະຍາກຳຂ້າມຊາດ, ຕ້ານການກໍ່ການຮ້າຍ, ເກັບກູ້ລະເບີດທີ່ບໍ່ທັນແຕກ ຕົກຄ້າງຈາກສົງຄາມ ໃນເຂດສາມຫຼ່ຽມພັດທະນາ ແລະ ການຊອກຄົ້ນອັດຖິຂອງບັນດາທະຫານທີ່ເສຍຊີວິດໃນສົງຄາມຜ່ານມາກັບຄືນປະເທດ ແລະ ບັນຫາອື່ນໆ ທີ່ເປັນຄວາມສົນໃຈຂອງທັງສາມປະເທດ.

ສຸດທ້າຍນີ້, ຂ້າພະເຈົ້າ ຕາງໜ້າໃຫ້ສະພາແຫ່ງຊາດ ແຫ່ງ ສປປ ລາວ, ຂໍສະແດງຄວາມຂອບໃຈເປັນຢ່າງສູງ ແລະ ຂໍອວຍພອນໄຊອັນປະເສີດມາຍັງພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ, ບັນດາທ່ານປະທານ, ບັນດາທ່ານຜູ້ແທນ, ແຂກຜູ້ມີກຽດທຸກທ່ານທີ່ໄດ້ສະຫຼະເວລາອັນມີຄ່າຂອງຕົນເຂົ້າຮ່ວມກອງປະຊຸມຄັ້ງນີ້ ຈົ່ງມີພາລານາໄມສົມບູນ, ມີຄວາມຜາສຸກໃນຊີວິດຄອບຄົວ ຂໍອວຍພອນໃຫ້ກອງປະຊຸມຈົ່ງດຳເນີນໄປດ້ວຍຜົນສຳເລັດ ບົນຈິດໃຈສັນຕິພາບ, ມິດຕະພາບ, ສາມັກຄີ ແລະ ການຮ່ວມມື ເພື່ອຄວາມຈະເລີນຮຸ່ງເຮືອງ ແລະ ຍືນຍົງໃນພາກພື້ນ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ໃນນາມປະທານຮ່ວມ ຂໍປະກາດເປີດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ຂຶ້ນຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

# ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງອຸດົມໄຊ

ທ່ານ ຄຳດີ ວົງລ້ອມ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ໄດ້ໃຫ້ສຳພາດໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານໄດ້ໃຫ້ຮູ້ກ່ຽວກັບບັນຫາທີ່ພົ້ນເດັ່ນພາຍໃນແຂວງວ່າ:

**ວຽກງານການເມືອງ-ນຳພາແນວຄິດ:** ເອົາໃຈໃສ່ສຶກສາອົບຮົມວຽກງານການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ ຕະຫຼອດຮອດປະຊາຊົນບັນດາເຜົ່າພາຍໃນແຂວງໃຫ້ຮັບຮູ້, ເຂົ້າໃຈ ແລະ ພ້ອມກັນເປັນເຈົ້າການບຸກບືນສູ້ຊົນປະຄັບປະຄອງ ຜ່ານຜ່າຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ພວມປະເຊີນຢູ່ໂດຍລວມແມ່ນຍັງມີຄວາມສະຫງົບໂດຍພື້ນຖານ.

**ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ:** ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງງຊາດ ວ່າດ້ວຍແກ້ໄຂບັນຫາຢາເສບຕິດ ແລະ ປາກົດການຫຍໍ້ທໍ້ຢ່າງຈິງຈັງ ເປັນຕົ້ນແມ່ນສາມາດມ້າງຄະດີຢາເສບຕິດໄດ້ 182 ລາຍ, ຈັບຜູ້ຕ້ອງຫາໄດ້ 231 ຄົນ, ຍິງ 32 ຄົນ, ຍຶດຂອງກາງຢາເສບຕິດໄດ້ 12.639.163 ເມັດ, ທຳລາຍສວນຢາຝິ່ນໄດ້ 138 ຕອນ, ເນື້ອທີ່ 24,127 ເຮັກຕາ. ພ້ອມນີ້, ກໍໄດ້ເອົາໃຈໃສ່ແກ້ໄຂບັນຫາຄົນຕ່າງປະເທດ, ແອັບຕົກຕໍ່ອກ, ຕູ້ເກມອອນລາຍ, ອຸປະກອນຫຼິ້ນການພະນັນທີ່ຕ້ອງຫ້າມ, ຮ້ານເກັບຊື້ເຫຼັກເສດ, ຮ້ານບັນເທີງບໍລິການເປີດກາຍໂມງເວລາ ແລະ ບັນຫາອື່ນໆ ເຊິ່ງເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

**ການຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງ ແລະ ນິຕິກຳທີ່ເລັ່ງດ່ວນຂອງລັດຖະບານ ແລະ ຂອງແຂວງ** ເປັນຕົ້ນແມ່ນມະຕິເລກທີ 09/ລບ ວ່າດ້ວຍນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາການຂາດແຄນຄູ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ; ຄຳສັ່ງເລກທີ 11/ນຍ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ; ຂໍ້ຕົກລົງເລກທີ 93/ນຍ ວ່າດ້ວຍການຈັດຕັ້ງປະຕິບັດສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ; ຄຳສັ່ງເລກທີ 10/ນຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ຄຳສັ່ງເລກທີ 13/ນຍ ວ່າດ້ວຍການເພີ່ມທະວີແກ້ໄຂບັນຫາເຄັ່ງຮ້ອນຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ.

**ວຽກງານເສດຖະກິດຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ:** ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເປັນຕົ້ນແມ່ນເອົາໃຈໃສ່ດຶງດູດການລົງທຶນຈາກພາກລັດ, ພາກເອກະຊົນພາຍໃນ ແລະ ຕ່າງປະເທດ ເຂົ້າໃສ່ການພັດທະນາແຂວງ ໃນນີ້, ແຜນການລົງທຶນຂອງລັດ 45.549,92 ລ້ານກີບ, ການລົງທຶນພາກເອກະຊົນ



30.774.671,35 ລ້ານກີບ, ແກ້ໄຂບັນຫາໜີ້ສິນການລົງທຶນຂອງລັດ ທັງໃນແຜນ ແລະ ນອກແຜນທີ່ຄຸມເຄືອມາແຕ່ດົນຈາກຈຳນວນ 291,73 ຕື້ກີບ ຫຼຸດລົງຍັງເຫຼືອ 286,68 ຕື້ກີບ; ຈັດເກັບລາຍຮັບເຂົ້າງົບປະມານມາຮອດປັດຈຸບັນປະຕິບັດໄດ້ 98,9% ໃນນີ້, ພູດສູນກາງປະຕິບັດໄດ້ 180,71%, ພູດທ້ອງຖິ່ນປະຕິບັດໄດ້ 80,39%. ສ່ວນລາຍຈ່າຍປະຕິບັດໄດ້ 80,91%; ພ້ອມນີ້, ກໍໄດ້ສຳເລັດການດັດສົມລົດລັດ ແລະ ຕິດສະຕິກເກີໃນທົ່ວແຂວງ, ແກ້ໄຂລົດຕົກຄ້າງທີ່ບໍ່ທັນໄດ້ເສຍພາສີຢ່າງຈິງຈັງ, ຍຸບເລີກຮ້ານແລກປ່ຽນເງິນຕາທົ່ວໄປ, ຄຸ້ມຄອງການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ, ສະຖາບັນການເງິນເຂັ້ມງວດຂຶ້ນເທື່ອລະກ້າວ. ສຸມໃສ່ສົ່ງເສີມການຜະລິດກະສິກຳການປູກ, ການລ້ຽງ ເພື່ອທົດແທນການນຳເຂົ້າ ແລະ ຜະລິດເປັນສິນຄ້າສົ່ງອອກຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ. ອັນພົ້ນເດັ່ນແມ່ນການຜະລິດເຂົ້ານາແຊງໄດ້ເກີນແຜນ 23% ນອກຈາກນີ້ ແມ່ນການເກັບກູ້ຢາງພາລາ, ການປູກສາລີແຂງ ແລະ ພືດລົ້ມລຸກອື່ນໆ ເປັນສິນຄ້າສົ່ງອອກໄປ ສປ ຈີນ.

**ວຽກງານຂົງເຂດວັດທະນະທຳ-ສັງຄົມ:** ຈັດຕັ້ງປະຕິບັດບັນດາຄາດໝາຍຂອງແຕ່ລະຂະແໜງການ. ພ້ອມນີ້, ກໍໄດ້ເປີດສົກຮຽນໃໝ່ໃນທົ່ວແຂວງສົກຮຽນ 2023-2024; ສຸມໃສ່ສັກວັກຊິນຮອບປົກກະຕິ, ວັກຊິນໂຄວິດ-19; ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ ແລະ ພະຍາດຄໍຕີບທີ່ເກີດຂຶ້ນຢູ່ເມືອງງາ; ໂຄສະນາເຜີຍແຜ່ຂໍ້ມູນຜົນງານການເຄື່ອນໄຫວຂອງແຂວງອອກສູ່ສັງຄົມໂດຍຜ່ານສື່ຕ່າງໆ. ເອົາໃຈໃສ່ພັດທະນາສີມືແຮງງານ, ຈັດຫາງານຢູ່ພາຍໃນ ແລະ ສົ່ງໄປອອກແຮງງານຢູ່ຕ່າງປະເທດເປັນລະບົບດີຂຶ້ນ.

ໂອກາດນີ້, ປະທານສະພາປະຊາຊົນແຂວງອຸດົມໄຊ ຍັງໄດ້ຍົກໃຫ້ເຫັນບັນຫາທີ່ເຄັ່ງຮ້ອນຂອງແຂວງວ່າ: ບັນຫາຄ່າຄອງຊີບແພງ ໂດຍສະເພາະໄພເງິນເຟີ້, ນ້ຳມັນແພງ, ສິນຄ້າອຸປະໂພກ-ບໍລິໂພກ ແລະ ອື່ນໆ ທີ່ມີຜົນກະທົບຕໍ່ພະນັກງານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງ; ບັນຫາການພັດທະນາພື້ນຖານໂຄງຮ່າງ ຍັງບໍ່ທັນໄດ້ຮັບການແກ້ໄຂເທົ່າທີ່ຄວນ ໂດຍສະເພາະແມ່ນຖະໜົນຫົນທາງ, ຍັງມີບາງບ້ານບໍ່ມີໄຟຟ້າໃຊ້, ການຊົດເຊີຍຜົນກະທົບຈາກໂຄງການລົງທຶນຂອງລັດ ແລະ ເອກະຊົນຊັກຊ້າ, ລາຄາຊົດຊົດເຊີຍຍັງຕ່ຳບໍ່ເໝາະສົມ, ການຊອກຕະຫຼາດຈຳໜ່າຍ-ການກຳນົດລາຄາສິນຄ້າການກະເສດໃຫ້ປະຊາຊົນຍັງບໍ່ທັນໄດ້ຮັບການແກ້ໄຂ ແລະ ບັນຫາອື່ນໆ; ບັນຫາການວ່າງງານຂອງປະຊາຊົນໂດຍສະເພາະແມ່ນໄວໜຸ່ມຍິງ-ຊາຍຈຳນວນໜຶ່ງບໍ່ມີວຽກເຮັດງານທຳທີ່ຫຼັ່ງຈາກຮຽນຈົບວິຊາສະເພາະມາ.

ການຈັດຕັ້ງການຕິດຕາມກວດກາ 2 ວາລະແຫ່ງຊາດ ຄື: ຜົນໄດ້ຮັບ: ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ເຮັດໃຫ້ແຂວງສືບຕໍ່ສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ ສ້າງໄດ້ສະຕິເຄົາລົບລະບຽບ, ກົດໝາຍ, ຄວາມຕື່ນຕົວໃຫ້ແກ່ພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງຮັບຮູ້ ແລະ ເຂົ້າໃຈຕໍ່ກັບບັນດາແນວທາງຂອງພັກ, ນະໂຍບາຍຂອງລັດຢ່າງເລິກເຊິ່ງ ພ້ອມກັນຈັດຕັ້ງປະຕິບັດ ແລະ ເປັນເຈົ້າການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດເພື່ອເປັນເຈົ້າການບຸກບືນສູ້ຊົນໄປດ້ວຍກັນຢ່າງພ້ອມພຽງຮຽງໜ້າ.

ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດການຕິດຕາມກວດກາຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງ, ນິຕິກຳຕ່າງໆເຂົ້າສູ່ວຽກງານຕົວຈິງຂອງສະພາປະຊາຊົນແຂວງຕໍ່ການເຄື່ອນໄຫວຂອງອົງການປົກຄອງແຂວງບາງດ້ານຍັງຊັກຊ້າ, ບໍ່ທັນຕາມກຳນົດເວລາ ແລະ ບາງໜ້າວຽກແມ່ນບໍ່ໄປຕາມແຜນ. ການຕິດຕາມກວດກາຕໍ່ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຜ່ານມາ ເຖິງວ່າອົງການປົກຄອງຈະສຸມໃສ່ແກ້ໄຂແລ້ວກໍຕາມ ແຕ່ເຫັນໄດ້ວ່າຍັງມີບາງດ້ານຍັງບໍ່ທັນເອົາໃຈໃສ່ໄດ້ເທົ່າທີ່ຄວນ ເປັນຕົ້ນແມ່ນການຜັນຂະຫຍາຍບັນມະຕິ, ຄຳສັ່ງ ແລະ ກົດໝາຍຍັງເຮັດໄດ້ໜ້ອຍ, ບໍ່ທົ່ວເຖິງ ແລະ ບໍ່ໄປຕາມແຜນການ, ປະຊາຊົນບາງສ່ວນຍັງບໍ່ທັນຮັບຮູ້ກ່ຽວກັບຢ່າງເລິກເຊິ່ງ.

ຈາກບັນຫາທີ່ເຄັ່ງຮ້ອນກ່າວມາຂ້າງເທິງນັ້ນ, ສະພາປະຊາຊົນແຂວງ ກໍຄືແຂວງຂອງພວກເຮົາ ໄດ້ມີວິທີແກ້ໄຂບາງຈຸດສຸມດັ່ງກ່າວໃນຕໍ່ໜ້າຄື: ສືບຕໍ່ພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວຢ່າງວ່ອງໄວ, ໜັກແໜ້ນ ແລະ ຍືນຍົງຕາມທິດສ້າງແຂວງອຸດົມໄຊກາຍເປັນໃຈກາງດ້ານເສດຖະກິດ ໂດຍສຸມໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍ, ວຽກງານຈຸດສຸມແຜນພັດທະນາເສດຖະກິດ-ສັງຄົມໃຫ້ບັນລຸແຕ່ລະດ້ານ ແລະ ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າ, ການບໍລິການຕາມທ້ອງຕະຫຼາດໃຫ້ເຂັ້ມງວດກ່ວາເກົ່າ; ສົ່ງເສີມການຜະລິດກະສິກຳເພື່ອຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕິດພັນກັບການປຸງແຕ່ງດ້ວຍການນຳໃຊ້ເຕັກນິກວິທະຍາສາດ ເຮັດໃຫ້ຜະລິດຕະພັນມີສະມັດຕະພາບດີຂຶ້ນ ສາມາດຕອບສະໜອງຕາມຄວາມຕ້ອງການພາຍໃນ ແລະ ສົ່ງອອກ; ສຸມໃສ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນ ເປັນຕົ້ນແມ່ນກໍ່ສ້າງ, ປົກປັກຮັກສາ, ສ້ອມແປງເສັ້ນທາງທີ່ເຊື່ອມຕໍ່ໄປຫາຊົນນະບົດ, ບັນດາເມືອງ, ແຂວງ ພ້ອມທັງຂະຫຍາຍເສັ້ນທາງໄປຫາບັນດາບ້ານຢູ່ຊົນນະບົດໃຫ້ໄດ້ທົ່ວເຖິງ; ສຸມໃສ່ຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃຫ້ເຂັ້ມງວດ ເພີ່ມອັດຕາການປົກຫຸ້ມເນື້ອທີ່ປ່າໄມ້ໃຫ້ໄດ້ 55% ຂອງເນື້ອທີ່ທົ່ວແຂວງ, ລົງສຳຫຼວດ, ກວດກາ ແລະ ກໍ່ສ້າງ, ສ້ອມແປງຊົນລະປະທານ ເພື່ອໃຫ້ຕອບສະໜອງແກ່ການລົງມືທຳການຜະລິດຂອງປະຊາຊົນໃຫ້ທັນເວລາ.

# ສະພາປະຊາຊົນແຂວງວຽງຈັນ ຕ້ອນຮັບຄະນະຜູ້ແທນສະພາປະຊາຊົນແຂວງກົຍອງຊັງນຳ - ໂດ ສ. ເກົາຫຼີ

(ສພຊ) ທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບຄະນະຜູ້ແທນສະພາປະຊາຊົນແຂວງກົຍອງຊັງນຳ-ໂດ ສ.ເກົາຫຼີ ນຳໂດຍທ່ານ ຄິມ ຈິນບູ ປະທານສະພາປະຊາຊົນແຂວງກົຍອງຊັງນຳ-ໂດ ພ້ອມດ້ວຍຄະນະທີ່ໄດ້ມາພົບປະ ແລະ ຢ້ຽມຢາມສະພາປະຊາຊົນແຂວງວຽງຈັນໃນບໍ່ດົນມານີ້.



ໃນການພົບປະ, ທ່ານ ບຸນສອນ ເພັດລາວັນ ໄດ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງວຽງຈັນ ກ່າວຕ້ອນຮັບຄະນະຜູ້ແທນສະພາປະຊາຊົນແຂວງກົຍອງຊັງນຳ-ໂດ ສ.ເກົາຫຼີ ທີ່ມາຢ້ຽມຢາມສະພາປະຊາຊົນແຂວງວຽງຈັນຄັ້ງນີ້ ທັງໄດ້ລາຍງານສະພາບລວມຂອງແຂວງວຽງຈັນ ແລະ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງໂດຍຫຍໍ້ ເຊິ່ງທ່ານໄດ້ຍົກໃຫ້ເຫັນສະພາບທີ່ຕັ້ງ ແລະ ພູມສັນຖານບັນດາທ່າແຮງດ້ານການຜະລິດສິນຄ້າມີຄວາມອຸດົມສົມບູນທາງດ້ານທິວທັດທຳມະຊາດ, ມີທາງດ່ວນຈາກນະຄອນຫຼວງຫາວັງວຽງ ແລະ ມີເສັ້ນທາງລົດໄຟແລ່ນຜ່ານ ເຊິ່ງເປັນສິ່ງອຳນວຍຄວາມສະດວກດ້ານຄົມມະຄົມຂົນສົ່ງໂດຍສານ ແລະ ສິນຄ້າ. ຈາກນັ້ນ, ທ່ານ ຄິມ ຈິນບູ ປະທານສະພາປະຊາຊົນແຂວງກົຍອງຊັງນຳ-ໂດ ກໍໄດ້ກ່າວສະແດງຄວາມຂອບໃຈປະທານສະພາປະຊາຊົນແຂວງວຽງຈັນ ພ້ອມດ້ວຍຄະນະ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນໃນຄັ້ງນີ້ ພ້ອມກ່າວລາຍງານຫຍໍ້ກ່ຽວກັບສະພາບລວມຂອງແຂວງກົຍອງຊັງນຳ-ໂດ ແລະ ແຈ້ງສະພາບອື່ນໆໂດຍຫຍໍ້. ພ້ອມນັ້ນ, ຄະນະຜູ້ແທນທັງສອງຝ່າຍກໍໄດ້ແລກປ່ຽນຄຳເຫັນເຊິ່ງກັນແລະກັນ ທັງຮ່ວມກັນລົງລາຍເຊັນໃນບົດບັນທຶກຊ່ວຍຈຳການຮ່ວມມືຂອງສອງສະພາອີກດ້ວຍ.

ຕອນບ່າຍວັນດຽວກັນນີ້, ຄະນະຜູ້ແທນສະພາປະຊາຊົນແຂວງກົຍອງຊັງນຳ-ໂດ ສ. ເກົາຫຼີ ຍັງໄດ້ເຂົ້າຢ້ຽມຂ່ຳນັບທ່ານເຈົ້າແຂວງ ແຂວງວຽງຈັນຕື່ມອີກ.

**(ບູລາຕີ ແສນທະວົງ)**

# ປະກາດຍົກຍ້າຍ ແຕ່ງຕັ້ງພະນັກງານ-ລັດຖະກອນ ພາຍໃນກົງຈັກສະພາປະຊາຊົນແຂວງ



(ສພຊ) ພິທີປະກາດຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານ-ລັດຖະກອນເຂົ້າໃສ່ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາປະຊາຊົນແຂວງອັດຕະປື ເມື່ອບໍ່ດົນມານີ້ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມຂອງທ່ານ ແຫວນຄຳ ປະທຸມມະແສງ ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີບັນດາທ່ານຄະນະປະຈຳ,ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານ-ລັດຖະກອນເຂົ້າໃສ່ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາປະຊາຊົນແຂວງ ເຊິ່ງໃນນັ້ນໄດ້ຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ນາງ ອາລຸນນີ ໄຊຍະຈັກ ຮອງຂະແໜງຍຸຕິທຳ ເປັນຫົວໜ້າຂະແໜງ ປກຊ-ປກສ; ທ່ານ ນາງ ພຸດທະວີ ຫຼວງອາໄພ ວິຊາການຂະແໜງຍຸຕິທຳ ເປັນຮອງຫົວໜ້າຂະແໜງ ປກຊ-ປກສ ແລະ ທ່ານ ນາງ ພອງຈັນ ຊຸນພິນິດ ວິຊາການຂະແໜງບໍລິຫານ ແລະ ການເງິນ ເປັນຮອງຫົວໜ້າຂະແໜງຍຸຕິທຳ.

ໃນໂອກາດນີ້, ທ່ານ ແຫວນຄຳ ປະທຸມມະແສງ ໄດ້ກ່າວມີຄຳເຫັນໂອ້ລົມຕໍ່ການປະກາດຍົກຍ້າຍແຕ່ງຕັ້ງໜ້າທີ່ໃນຄັ້ງນີ້ ແມ່ນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດວຽກງານໃນໄລຍະໃໝ່ ຮັບປະກັນໃນການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ ຕາມພາລະບົດບາດຂອງຕົນ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ ເພື່ອຍົກສູງບົດບາດການນຳພາໃນຂະແໜງການທີ່ຈຳເປັນໃຫ້ມີຜົນສຳເລັດອັນໃໝ່. ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ຜູ້ທີ່ໄດ້ຮັບການແຕ່ງຕັ້ງໜ້າທີ່ໃໝ່ຄັ້ງນີ້ ຈົ່ງສືບຕໍ່ເພີ່ມທະວີການປະຕິບັດໜ້າທີ່ທີ່ພັກ-ລັດມອບໝາຍໃຫ້ມີຜົນສຳເລັດ, ເພີ່ມທະວີຄວາມສາມັກຄີໃນໝູ່ຄະນະໃຫ້ໜັກແໜ້ນ, ແບ່ງວຽກໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ພ້ອມກັນສູ້ຊົນນຳພາ-ຊີ້ນຳວຽກງານໃຫ້ປະສົບຜົນສຳເລັດ.

**(ວິມັດ)**

## ປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ




(ສພຊ) ຕອນເຊົ້າຂອງວັນທີ 29 ພະຈິກ 2023 ສະພາປະຊາຊົນແຂວງໄຊສົມບູນ ໄດ້ເປີດກອງປະຊຸມການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ສະພາປະຊາຊົນແຂວງໄຊສົມບູນ ປະຈຳປີ 2023 ພາຍໃຕ້ການເປັນປະທານຂອງທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ພັອ. ວິໄຊທໍ່ ເພຍຫຼວງຈົ່ງເສີ ຮອງປະທານສະພາປະຊາຊົນແຂວງ, ມີປະທານ-ຮອງປະທານ 3 ຄະນະກຳມະການ ແລະ ຄະນະເລຂາທິການ. ນອກນັ້ນ, ຍັງມີຫົວໜ້າ-ຮອງຫົວໜ້າຂະແໜງຕ່າງໆ ຕະຫຼອດຮອດພະນັກງານວິຊາການພາຍໃນສະພາປະຊາຊົນແຂວງໄຊສົມບູນ ເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດດັ່ງກ່າວ, ທ່ານ ປີຊົ່ງ ຕົ່ງເລັ່ງ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ກ່າວຈຸດປະສົງຂອງການເປີດກອງປະຊຸມຄັ້ງນີ້ ເຊິ່ງແມ່ນການປະຕິບັດຕາມສິດ, ພາລະບົດບາດ ແລະ ໜ້າທີ່ ເພາະເປັນກົດລະບຽບຂອງລັດຖະກອນທີ່ພັກ ແລະ ລັດ ໄດ້ກຳນົດໄວ້ ທີ່ມີຄວາມຈຳເປັນຕ້ອງໄດ້ປະເມີນຜົນການປະຕິບັດວຽກງານຂອງຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ວິຊາການຂອງທຸກໆປີ. ພ້ອມດຽວກັນນີ້, ທ່ານ ຄຳພູທອນ ວົງພະຈັນ ປະທານກອງປະຊຸມ ໄດ້ມີຄຳເຫັນຊີ້ນຳຕໍ່ການປະເມີນ ເພື່ອໃຫ້ການປະເມີນໃນຄັ້ງນີ້ດຳເນີນໄປຢ່າງຖືກຕ້ອງຕາມຂັ້ນຕອນ ທັງໄດ້ເຊື່ອມຊຶມນິຕິກຳ ແລະ ແນະນຳແບບຟອມການປະເມີນ.

ໃນການປະເມີນໄດ້ແບ່ງອອກເປັນ 3 ຈຸຄື: ຈຸທີ 1 ແມ່ນຄະນະເລຂາທິການ ມີ 15 ທ່ານ ຍິງ 6 ທ່ານ; ຈຸທີ 2 ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດປ້ອງກັນຄວາມສະຫງົບ ຈຳນວນ 9 ທ່ານ ຍິງ 4 ທ່ານ; ຈຸທີ 3 ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຈຳນວນ 7 ທ່ານ ຍິງ 2 ທ່ານ.

ໃນແຕ່ລະຈຸ ໄດ້ປະຕິບັດຈັດຕັ້ງ ແລະ ປະເມີນຜົນ ໂດຍແຕ່ລະທ່ານໄດ້ຜ່ານໃບເກັບກ່ຽວຜົນງານປະຈຳປີຂອງຕົນ ແລະ ໄດ້ເລີ່ມຈາກຫົວໜ້າ-ຮອງຫົວໜ້າຂະແໜງ ລົງມາຮອດ ພະນັກງານວິຊາການ ແຕ່ລະກຸ່ມມີຄະນະຕາງໜ້າຈາກພະແນກພາຍໃນແຂວງ, ອົງການກວດກາລັດແຂວງ ເຂົ້າຮ່ວມຮັບຟັງ ເພື່ອສັງລວມຜົນການປະເມີນໃນຄັ້ງນີ້.

ພາຍຫຼັງທີ່ສຳເລັດການປະເມີນດັ່ງກ່າວແລ້ວ ທ່ານປະທານກອງປະຊຸມໄດ້ແຈ້ງຜົນການປະເມີນໃຫ້ທີ່ປະຊຸມຮູ້ຄື: ພະນັກງານ-ລັດຖະກອນສະພາປະຊາຊົນແຂວງໄຊສົມບູນ ຜູ້ຖືກປະເມີນທັງໝົດ ຈຳນວນ 29 ທ່ານ ໃນນັ້ນ, ປະເພດດີຫຼາຍ ມີຈຳນວນ 13 ທ່ານ ຍິງ 1 ທ່ານ; ປະເພດດີ 15 ທ່ານ ຍິງ 7 ທ່ານ ແລະ ປະເພດກາງ ຍິງ 1 ທ່ານ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ຖະແຫຼງຂ່າວການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ



(ສພຊ) ໃນວັນທີ 30 ພະຈິກ 2023 ທີ່ສຳນັກງານອົງການປົກຄອງນະຄອນຫຼວງວຽງຈັນ, ທ່ານ ນະຄະເສນ ສີຫາລາດ ເລຂາທິການສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ6ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ເຊິ່ງດຳເນີນໃນລະຫວ່າງວັນທີ 5-8 ທັນວາ 2023 ຢູ່ທີ່ຫ້ອງປະຊຸມສຳນັກງານອົງການປົກຄອງນະຄອນຫຼວງວຽງຈັນ ເພື່ອຈະສຸມໃສ່ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງນະຄອນຫຼວງວຽງຈັນ ດັ່ງນີ້:

ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງນະຄອນຫຼວງ, ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃນໄລຍະປີ 2021-2023 ຢູ່ນະຄອນຫຼວງວຽງຈັນ; ພິຈາລະນາ, ຮັບຮອງເອົາຮ່າງຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ຈຳນວນ 2 ສະບັບຄື: ຮ່າງຂໍ້ຕົກລົງວ່າດ້ວຍການກຳນົດລາຄາຫົວໜ່ວຍຊົດເຊີຍທົດແທນຄ່າເສຍຫາຍຂອງໂຄງການກໍ່ສ້າງປ້ອງກັນຕາຝັ່ງ ແລະ ພັດທະນາແຄມຂອງ ໄລຍະ II ແລະ ຮ່າງຂໍ້ຕົກລົງວ່າດ້ວຍກອງທຶນພັດທະນາກິລາ-ກາຍະກຳ ນະຄອນຫຼວງວຽງຈັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງອົງການກວດສອບປະຈຳພາກກາງ; ຜົນການກວດສອບປະຈຳປີ 2022 ຂອງອົງການກວດສອບປະຈຳພາກກາງ 1; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ ຕາມມະຕິ 007/ສປນວ, ສະບັບເລກທີ 10 ກຸມພາ 2023; ຜົນການຕິດຕາມກວດກາຕາມຜົນການກວດສອບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2018 ຢູ່ບາງພະແນກການ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງອົງການໄອຍະການປະຊາຊົນພາກກາງ ແລະ ອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສານປະຊາຊົນ ພາກກາງ ແລະ ສານປະຊາຊົນ ນະຄອນຫຼວງວຽງຈັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ຕິດພັນກັບແຜນການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II.

ພ້ອມນັ້ນ, ຍັງຈະໄດ້ຮັບຟັງການປະກອບຄຳເຫັນຂອງອົງການແນວລາວສ້າງຊາດນະຄອນຫຼວງວຽງຈັນ ຕໍ່ຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ; ຮັບຟັງການລາຍງານຊີ້ແຈງບາງບັນຫາສຳຄັນສຳຄັນ ແລະ ພົ້ນເດັ່ນ ຂອງນະຄອນຫຼວງວຽງຈັນຈຳນວນໜຶ່ງ ເປັນຕົ້ນວິທີການ, ມາດຕະການ ໃນການຊຸກຍູ້ສົ່ງເສີມ ແລະ ຂະຫຍາຍແຫຼ່ງລາຍຮັບໃໝ່ຂອງນະຄອນຫຼວງວຽງຈັນ ທີ່ຕິດພັນກັບຂົງເຂດກະສິກຳ ແລະ ປ່າໄມ້, ຂົງເຂດອຸດສະຫະກຳ ແລະ ການຄ້າ, ຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂົງເຂດເຂດເສດຖະກິດພິເສດ; ກົນໄກ, ມາດຕະການສົ່ງເສີມ ແລະ ປົກປ້ອງການຜະລິດພາຍໃນ ລວມທັງການແບ່ງຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ; ການຈັດຕັ້ງປະຕິບັດຜັງເມືອງ ແລະ ມາດຕະການຄຸ້ມຄອງຜັງເມືອງ ຢູ່ນະຄອນຫຼວງວຽງຈັນ; ການຄຸ້ມຄອງຄົນຕ່າງປະເທດ ທີ່ຢູ່ນະຄອນຫຼວງວຽງຈັນ; ການຄຸ້ມຄອງ, ຕິດຕາມກວດກາ ການສຶກສາສຳຫຼວດ, ຂຸດຄົ້ນ ຫຼື ສຳປະທານແຮ່ເກືອໂປຕັສ (ເກືອກາລີ) ຢູ່ນະຄອນຫຼວງວຽງຈັນ; ການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ ເພື່ອຕ້ອນຮັບການເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ແລະ ປີທ່ອງທ່ຽວລາວ 2024 ແລະ ການແກ້ໄຂບັນຫາເລື່ອງປ້າຍໂຄສະນາທີ່ບໍ່ຖືກຕ້ອງ ຢູ່ນະຄອນຫຼວງວຽງຈັນ.

ນອກຈາກບັນດາເນື້ອໃນທີ່ໄດ້ກ່າວມາຂ້າງເທິງແລ້ວ, ກອງປະຊຸມຍັງຈະໄດ້ຮັບຟັງການຊີ້ແຈງບາງບັນຫາທີ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນ ນະຄອນຫຼວງ ຊັກຖາມໃນກອງປະຊຸມຈາກພາກສ່ວນທີ່ກ່ຽວຂ້ອງຕື່ມອີກ.

ການດຳເນີນກອງປະຊຸມຄັ້ງນີ້ ແມ່ນການປະຕິບັດພາລະບົດບາດຂອງສະພາປະຊາຊົນໃນຖານະເປັນອົງການ ອຳນາດລັດຂັ້ນນະຄອນຫຼວງ ທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ຊາວນະຄອນຫຼວງວຽງຈັນ. ດັ່ງນັ້ນ, ຈຶ່ງຂໍເຊີນຊວນບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສັງຄົມທຸກພາກສ່ວນ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ໂດຍສະເພາະຊາວນະຄອນຫຼວງວຽງຈັນ ຈົ່ງໃຫ້ການຕິດຕາມຂ່າວສານທາງໂທລະພາບ, ວິທະຍຸກະຈາຍສຽງ, ສື່ສິ່ງພິມຕ່າງໆ ແລະ ສາມາດມີຄຳຄິດຄຳເຫັນ ຫຼື ຄຳສະເໜີເຂົ້າໃນກອງປະຊຸມຜ່ານທາງໂທລະສັບສາຍດ່ວນ ໝາຍເລກ 1156 ຫຼື ໝາຍເລກໂທລະສັບ 021 260 251, 260242 ເຊິ່ງເລີ່ມເປີດຮັບຄຳສະເໜີ, ຄຳຄິດຄຳເຫັນຕໍ່ກອງປະຊຸມ ນັບແຕ່ມື້ນີ້ເປັນຕົ້ນໄປ.

# ເງິນເຟີ້, ລາຄາສິນຄ້າແພງ ແລະ ອັດຕາແລກປ່ຽນ ບັນຫາທີ່ປະຊາຊົນ ຢາກໃຫ້ທາງລັດຖະບານແກ້ໄຂຢ່າງຮີບດ່ວນ

ເມື່ອວັນທີ 1 ພະຈິກ 2023 ໃນກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດ ຊຸດທີ IX ໂອກາດດັ່ງກ່າວ **ທ່ານ ສາຍທອງ ໄຊຍະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມ ທີ່ລັດຖະບານໄດ້ນຳສະເໜີໃນກອງປະຊຸມດັ່ງກ່າວ ໂດຍທ່ານໄດ້ສະແດງຄວາມຊົມເຊີຍຕໍ່ລັດຖະບານທີ່ມີຄວາມພະຍາຍາມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເຊິ່ງຢູ່ໃນທ່າມກາງທີ່ສະພາບຂອງໂລກ ກໍຄືພາກພື້ນ ທີ່ປະສົບກັບຄວາມຫຍຸ້ງຍາກຄວາມສັບສົນ ແລະ ສະພາບເສດຖະກິດຂອງປະເທດເຮົາກໍຢູ່ໃນສະພາບທີ່ມີຄວາມຫຍຸ້ງຍາກ ແຕ່ໃນການປະຕິບັດຕົວຈິງ ລັດຖະບານກໍມີຄວາມພະຍາຍາມ ແລະ ມີຜົນສຳເລັດ ແຕ່ບາງດ້ານກໍມີຄວາມສ່ຽງ ທີ່ຈະບໍ່ປະສົບຜົນສຳເລັດ.

ທ່ານໄດ້ກ່າວວ່າ: ກ່ຽວກັບບັນຫາຂອງອັດຕາເງິນເຟີ້ ບັນຫາຂອງລາຄາສິນຄ້າ, ບັນຫາຂອງອັດຕາແລກປ່ຽນ ຕໍ່ບັນຫາດັ່ງກ່າວ ເວົ້າງ່າຍໆແມ່ນຄວາມຮຽກຮ້ອງຕ້ອງການຂອງສັງຄົມ ກໍຄືຂອງປະຊາຊົນ ຢາກໃຫ້ທາງລັດຖະບານໄດ້ເລັ່ງລັດໃຫ້ມີການແກໄຂສະພາບດັ່ງກ່າວ ເພື່ອໃຫ້ເຂົ້າສູ່ສະພາບປົກກະຕິ ແຕ່ຂ້າພະເຈົ້າກໍເຂົ້າໃຈວ່າລັດຖະບານກໍທຸ່ມຢ່າງສຸດຂີດ ເຮັດໃຫ້ບັນຫາດັ່ງກ່າວຄ່ອຍໆດີຂຶ້ນມາຮອດປັດຈຸບັນ ແລະ ກໍເຂົ້າໃຈວ່າ ມັນໃຊ້ເວລາໃນການແກ້ໄຂສະພາບເສດຖະກິດ ໃນເມື່ອຮາກມັນຖືກຜົນກະທົບ ເພາະໃນສະພາບຂອງໂລກປັດຈຸບັນກໍບໍ່ທັນລຶດລະບັນຫາທີ່ມີຜົນກະທົບຢູ່ຂ້າງນອກ ແລະ ຂ້າງໃນມີຫຼາຍ ຈັ່ງຊັ້ນ ກ່ຽວກັບການແກ້ໄຂອັດຕາເງິນເຟີ້ນີ້ ຄິດວ່າມີຫຼາຍບັນຫາທີ່ຕິດພັນ ອາດຈະແມ່ນລາຄາສິນຄ້າ ອັດຕາແລກປ່ຽນ ບັນຫາຂອງ M2 ກໍເປັນບັນຫາຍາກທີ່ພວກເຮົາຈະແກ້ໄຂໄດ້ ແຕ່ວ່າບັນຫາທີ່ຂ້າພະເຈົ້າຢາກສະເໜີ ອັນທີ່ເຮົາພໍທີ່ຈະສາມາດຈັດຕັ້ງປະຕິບັດໄດ້ໃນບາງດ້ານ ເພື່ອເຮັດໃຫ້ສະພາບເສດຖະກິດຂອງພວກເຮົາຄ່ອຍໆຄາຍໆຂຶ້ນມາ ກໍຄື:



1. ການຄຸ້ມຄອງເງິນຕາຕ່າງປະເທດ ເພາະບັນຫາການຄຸ້ມຄອງເງິນຕາຕ່າງປະເທດນີ້ ຕິດພັນການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ ບັນຫາດັ່ງກ່າວນີ້ ກໍເຂົ້າໃຈວ່າໃນເບື້ອງຂອງລັດຖະບານ ແລະ ໃນບົດສະຫຼຸບ ກໍໄດ້ເວົ້າແຈ້ງວ່າ ຢູ່ໃນປີ 2020 ພວກເຮົາໄດ້ 41 ຄາດໝາຍ ໝົດປີນີ້ພວກເຮົາກໍຈະບັນລຸໄດ້ 50 ແຕ່ວ່າເຮັດແນວໃດ ເພື່ອໃຫ້ສະພາບການຈັດຕັ້ງປະຕິບັດໄດ້ຮັດແໜ້ນເຂົ້າໄປຕື່ມ ໃນອັນທີ່ພວກເຮົາສາມາດເຮັດໄດ້ ປັດຈຸບັນ ບາງບ່ອນ ບາງຈຸດ ຍັງບໍ່ທັນຖືກຈັດຕັ້ງປະຕິບັດ ຕົວຢ່າງ: ການນຳອອກສິນຄ້າ ນຳເຂົ້າສິນຄ້າ ຜ່ານລະບົບທະນາຄານ ຍັງບໍ່ທັນເຮັດໄດ້ດີ ສະນັ້ນ, ຕໍ່ບັນຫາດັ່ງກ່າວນີ້ ຂ້າພະເຈົ້າຢາກໃຫ້ທາງເບື້ອງລັດຖະບານຊຸກຍູ້ຕື່ມ ໃຫ້ບັນຫາດັ່ງກ່າວນີ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ເວົ້າງ່າຍໆກໍຄືບັນດາບໍລິສັດໃດທີ່ບໍ່ຜ່ານລະບົບທະນາຄານ ສະເໜີໃຫ້ປະຕິບັດຢ່າງເດັດຂາດ ແລະ ເຂັ້ມງວດ ເພື່ອໃຫ້ບັນຫາດັ່ງກ່າວ ຖືກຈັດຕັ້ງປະຕິບັດເອກະພາບກັນໃນທົ່ວປະເທດ.

2. ເພື່ອເປັນການສ້າງລາຍຮັບວຽກງານການທ່ອງທ່ຽວນີ້ ກໍເປັນຂະແໜງໜຶ່ງທີ່ມີຄວາມສຳຄັນໃນການສ້າງລາຍຮັບໃຫ້ແກ່ປະເທດຊາດກໍຄືໃນທ້ອງຖິ່ນ ແຕ່ບັນຫາດັ່ງກ່າວນີ້ ຖ້າຈະເປັນການສ້າງລາຍຮັບກໍມີຫຼາຍເງື່ອນໄຂ ມີຫຼາຍປັດໄຈ ພວກເຮົາຕ້ອງສ້າງໃນສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອໃຫ້ບັນຫາດັ່ງກ່າວນີ້ໄດ້ຖືກຈັດຕັ້ງປະຕິບັດ ເຊິ່ງດ້ານຄວາມສະດວກ ຫຼາຍທ່ານກໍໄດ້ຍົກຂຶ້ນໃຫ້ເຫັນກ່ຽວກັບເສັ້ນທາງ ເພາະປີໜ້ານີ້ ພວກເຮົາກໍຈະເປີດປີທ່ອງທ່ຽວ ສະນັ້ນ, ໃນການເປີດການທ່ອງທ່ຽວນີ້ ນັກທ່ອງທ່ຽວກໍຈະເຂົ້າມາຫຼາຍ ແຕ່ບັນຫາເສັ້ນທາງຂອງພວກເຮົາຍັງຫຍຸ້ງຍາກຫຼາຍ ຢາກໃຫ້ທາງລັດຖະບານສຸມທຶນຮອນໃນການສ້ອມແປງເສັ້ນທາງຫຼັກ ບ່ອນມັນເປັນຂຸມເປັນບໍ່ ຢາກໃຫ້ມີການສ້ອມແປງ ໄປ-ມາໄດ້ມາສະດວກ ບໍ່ໃຫ້ເຖິງຂັ້ນວ່າຕ້ອງທຸ່ມເທທຶນຮອນທີ່ຫຼວງຫຼາຍ ເພາະພວກເຮົາກໍເຂົ້າໃຈຢູ່ວ່າ ປັດຈຸບັນນີ້ ພວກເຮົາມີສະພາບຄວາມຫຍຸ້ງຍາກຫຼາຍອັນ ແຕ່ວ່າຈະເຮັດແນວໃດເສັ້ນທາງຂອງພວກເຮົາຈຶ່ງຈະສະດວກກວ່າເກົ່າ ເພາະປີທ່ອງທ່ຽວນີ້ ເສັ້ນທາງເປັນບັນຫາສຳຄັນ ຈະຕ້ອງໄດ້ແກ້ໄຂດ່ວນ ເພື່ອດຶງດູດການທ່ອງທ່ຽວ ໂດຍສະເພາະແມ່ນເສັ້ນທາງຈາກນະຄອນຫຼວງວຽງຈັນເຖິງປາກເຊ ຢາກສະເໜີໃຫ້ທາງລັດຖະບານສຸມທຶນຮອນໃສ່ການສ້ອມແປງ.

3. ເລື່ອງການຄຸ້ມຄອງລາຄາສິນຄ້າ ກໍເປັນບັນຫາຍາກ ເພາະວ່າມັນຕິດພັນກັບອັດຕາແລກປ່ຽນ ສ່ວນສະພາບຕ່າງໆກໍຫັນນຳກັນ ແຕ່ວ່າ ຂ້າພະເຈົ້າກໍຢາກສະເໜີບາງຈຸດຄື: ໃນການຄຸ້ມຄອງລາຄາ ອັນທີ່ພວກເຮົາສາມາດເຮັດໄດ້ ຕົວຢ່າງວ່າ ພວກເຮົາຄວນມີການກຳນົດໂຄງສ້າງລາຄາສິນຄ້າ ກຳນົດລາຄາເຂົ້າ, ລາຄາຊີ້ນ ຊິແມ່ນຊີ້ນງົວ, ຊີ້ນຄວາຍ, ຊີ້ນໝູ ຫຼື ວ່າໄຂ່ ທີ່ພວກເຮົາສາມາດຜະລິດຢູ່ພາຍໃນ ແລະ ພວກເຮົາກໍຄິດວ່າສາມາດທີ່ຈະສ້າງເປັນໂຄງສ້າງຂອງລາຄາສິນຄ້າ ເພື່ອໃຫ້ມີຄວາມຈະແຈ້ງ ໃຫ້ມີຄວາມຖືກຕ້ອງ ໃຫ້ມີຄວາມເໝາະສົມ ວາງລາຄາໃນທ້ອງຕະຫຼາດ ເພື່ອໃຫ້ຄວາມເປັນທຳ ທັງຜູ້ບໍລິໂພກ ທັງຜູ້ຜະລິດ ໃຫ້ມີລາຄາເປັນເອກະພາບກັນ ສະນັ້ນ, ພວກເຮົາຈະຕ້ອງສ້າງໂຄງສ້າງຂອງລາຄາສິນຄ້າໃຫ້ໄດ້ ອັນນີ້ພວກເຮົາສາມາດເຮັດໄດ້.

ການຄຸ້ມຄອງລາຄາສິນຄ້າຂາເຂົ້າ ພວກເຮົາກໍຄວນຄຸ້ມຄອງນັບແຕ່ຕົ້ນທາງ ກໍຄືເລີ່ມແຕ່ລາຄາສິນຄ້າເຂົ້າມາ ພາສີທໍ່ໃດ, ຂົນສົ່ງທໍ່ໃດ, ອາກອນທໍ່ໃດຈົນຮອດຂາຍຍົກຂາຍຍ່ອຍ ແລະ ພວກເຮົາຈະຕ້ອງມີກົນໄກຄຸ້ມຄອງ ເຮັດຈັ່ງໃດໃຫ້ລາຄາຢູ່ໃນຄວາມເປັນທຳ ບໍ່ໃຫ້ຊະບໍ່ໃຫ້ຊາຍ ໝາຍວ່າທຸກສິນຄ້າທີ່ເຂົ້າມາ ຕ້ອງຢູ່ໃນການຄຸ້ມຄອງຂອງລັດຖະບານ ເພາະເຖິງວ່າມັນຈະແພງ ກໍແພງຢູ່ໃນຄວາມທີ່ເໝາະສົມ ແລະ ອີກບັນຫາໜຶ່ງໄປພ້ອມໆກັນນັ້ນ ພວກເຮົາກາຄວນຈຳກັດ, ຫຼີກລ່ຽງ ການນຳເຂົ້າສິນຄ້າອັນໃດທີ່ພວກເຮົາສາມາດຜະລິດໄດ້ຢູ່ພາຍໃນ ລາຄາ ຫຼື ວ່າຄຸນນະພາບຈຳພວກເຮົາສາມາດສະໜອງໄດ້ ກໍຂໍໃຫ້ລັດຖະບານໄດ້ຄົ້ນຄວ້າ ມີການສະກັດກັ້ນ ເຮັດຈັ່ງໃດຈະໄດ້ປົກປ້ອງການຜະລິດພາຍໃນຂອງພວກເຮົາ ເພື່ອເຮັດໃຫ້ມີການກະຕຸ້ນສິນຄ້າພາຍໃນ ທີ່ສາມາດຜະລິດໄດ້.

ອີກບັນຫາໜຶ່ງທີ່ຂ້າພະເຈົ້າຢາກສະເໜີ ກ່ຽວກັບການຜະລິດຢູ່ແຂວງຈຳປາສັກ ກໍເຫັນວ່າມີຫຼາກຫຼາຍສ່ວນໃຫຍ່ແມ່ນການຜະລິດທາງດ້ານກະສິກຳ ໃນນັ້ນ, ແມ່ນການຜະລິດກາເຟ ພວກເຮົາກໍຮັບຮູ້ວ່າເປັນກາເຟທີ່ມີຄຸນນະພາບສູງ ຜະລິດຢູ່ໃນພູພຽງບໍລິເວນ ສະນັ້ນຈະແມ່ນການຜະລິດສຳເລັດຮູບ ຫຼືບໍ່ສຳເລັດຮູບ ພວກເຮົາກໍສາມາດຕອບສະໜອງໄດ້ໝົດ ຕໍ່ບັນຫາດັ່ງກ່າວນີ້ ຖ້າເປັນໄປໄດ້ ຂ້າພະເຈົ້າກໍຢາກສະເໜີໃຫ້ລັດຖະບານເບິ່ງຕື່ມ ໃນການສະກັດກັ້ນການນຳເຂົ້າ.

4. ກ່ຽວກັບການສົ່ງເສີມການຜະລິດ ຫຼື ທົດແທນການນຳເຂົ້າ ໄປພ້ອມໆກັນນັ້ນ ເຮັດແນວໃດ ເພື່ອສົ່ງເສີມການຜະລິດສົ່ງອອກ ຈຶ່ງຢາກສະເໜີໃຫ້ລັດຖະບານ ຄວນມີນະໂຍບາຍແນວໃດບໍ່? ເພື່ອເຮັດໃຫ້ການຜະລິດຂອງພໍ່ແມ່ປະຊາຊົນ ກໍຄືບັນດາບໍລິສັດຕ່າງໆມີການແຂ່ງຂັນ ແລະ ບັນຫາການເຂົ້າເຖິງແຫຼ່ງທຶນ.

**ຮຽບຮຽງໂດຍ: ກົງໃຈ ແສງອຳພັນ**

# ກອງປະຊຸມຄົບຄະນະ ຄວສຜ ສະພາປະຊາຊົນແຂວງຄຳມ່ວນ

(ສພຊ) ວັນທີ 29 ພະຈິກ 2023 ທີ່ຫ້ອງປະຊຸມ ສະພາປະຊາຊົນແຂວງຄຳມ່ວນ (ສພຂ), ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ສພຂ ໄດ້ສຳເລັດກອງປະຊຸມຄົບຄະນະ ປະຈຳປີ 2023 ໂດຍການເປັນປະທານຂອງທ່ານ ນາງ ກ້ອນແກ້ວ ຫຼວງໄຊມຸງຄຸນ ປະທານ ຄວສຜ; ເຂົ້າຮ່ວມມີທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກ ສພຂ ທີ່ເປັນ ຄວສຜ, ຫົວໜ້າ-ຮອງຫົວໜ້າພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງໃນຂົງເຂດວັດທະນະທຳ-ສັງຄົມ.

ໃນກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວປີ 2024 ຂອງກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ເພື່ອຕີລາຄາຜົນງານທີ່ຜ່ານມາ ເຊິ່ງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງພະແນກສຶກສາທິການ ແລະ ກິລາແຂວງ, ພະແນກສາທາລະນະສຸກແຂວງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ພະແນກພາຍໃນແຂວງ ແລະ ວຽກງານຊົນເຜົ່າ ແລະ ສາສະໜາ, ວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ການຕິດຕາມກວດກາວຽກງານຄຳຮ້ອງຄຳສະເໜີໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ



ໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ.

ໂອກາດດັ່ງກ່າວ, ທ່ານ ບົວພັນ ແສງຈັນ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ຕາງໜ້າຄະນະປະຈຳສະພາປະຊາຊົນແຂງຄຳມ່ວນ ຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກໍຄືບັນດາທ່ານສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ສັງກັດຄະນະກຳມະການ ທີ່ໄດ້ມີຄວາມເອົາໃຈໃສ່, ມີຄວາມພະຍາຍາມສູງ ໃນການນຳພາການເຄື່ອນໄຫວປະຕິບັດວຽກງານໃນໄລຍະ 1 ປີຜ່ານມາ, ພ້ອມນັ້ນທ່ານຮອງປະທານສະພາປະຊາຊົນແຂວງ ຍັງໄດ້ເນັ້ນໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມເອົາໃຈໃສ່ທົບທວນຄືນ, ກຳແໜ້ນທີ່ຕັ້ງ, ພາລະບົດບາດ, ສິດແລະໜ້າທີ່ຂອງກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເປັນຕົ້ນ: ການເຄື່ອນໄຫວຂອງສະພາປະຊາຊົນແຂວງຄຳມ່ວນ 2023-2025 ໂດຍຕິດພັນກັບຂົງເຂດວັດທະນະທຳ-ສັງຄົມ ນັບທັງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ຂອງລັດຖະບານ ເປັນຕົ້ນແມ່ນການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາຕົວຊີ້ວັດ (ຄາດໝາຍ) ຂອງຂະແໜງການວັດທະນະທຳ-ສັງຄົມ; ສືບຕໍ່ເອົາໃຈໃສ່ຕິດຕາມກວດກາວຽກງານຂົງເຂດວັດທະນະທຳ-ສັງຄົມ ເປັນຕົ້ນຂະແໜງການສຶກສາ ເຊິ່ງປັດຈຸບັນເຫັນວ່າມີຜົນກະທົບດ້ານສັງຄົມຢູ່ບໍ່ໜ້ອຍ ເປັນຕົ້ນ ອັດຕາການເຂົ້າຮຽນໃນຊັ້ນຕ່າງໆ, ສະພາບການຮຽນ-ການສອນຢູ່ເຂດຊົນນະບົດ-ເຂດຫ່າງໄກສອກຫຼີກ; ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ ການຕິດຕາມ ການປັບປຸງຄຸນນະພາບຂອງແຮງງານ (ຄວາມເຂັ້ມແຂງຂອງແຮງງານ), ການສ້າງວຽກເຮັດງານທຳ, ການແຕກໂຕນກັນ ລະຫວ່າງສັງຄົມຊົນນະບົດ ແລະ ສັງຄົມຕົວເມືອງ; ຮຽກຮ້ອງໃຫ້ບັນດາທ່ານລົງເລິກບັນດາວຽກງານໃນຂົງເຂດຄວາມຮັບຜິດຊອບຂອງຕົນ ແລະ ຂົງເຂດຂອງກຳມາທິການວັດທະນະທຳ-ສັງຄົມ ເພື່ອລົງເລິກ, ກຳແໜ້ນບັນຫາ, ພ້ອມນັ້ນ ກໍໃຫ້ເອົາໃຈໃສ່ໃນລະບົບການສ່ອງແສງລາຍງານໃຫ້ກຳມະການເດືອນລະເທື່ອຕາມໜ້າວຽກຕົວຈິງ; ກຳມະການ ສືບຕໍ່ເອົາໃຈໃສ່ເພີ່ມທະວີວຽກງານການສ້າງຄວາມເຂັ້ມແຂງ ເປັນຕົ້ນແມ່ນການຝຶກອົບຮົມໃຫ້ ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ສັງກັດກຳມະການ ຕະຫຼອດຮອດພະນັກງານທີ່ເປັນເສນາທິການຂົງເຂດວັດທະນະທຳ-ສັງຄົມ; ເພື່ອຍົກລະດັບຄວາມຮູ້-ຄວາມສາມາດ ໃຫ້ມີຄວາມເລິກເຊິ່ງ, ເຂັ້ມແຂງຂຶ້ນເປັນກ້າວໆ.

(ເອື້ອ ມະໂນສິງ)




# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍກ່ຽວກັບຄວາມປອດໄພຂອງເຂື່ອນ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບຄວາມປອດໄພຂອງເຂື່ອນ;

4. ຊີ້ນໍາ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກ່ຽວກັບຄວາມປອດໄພຂອງເຂື່ອນ ໃນຂອບເຂດທົ່ວປະເທດ;

5. ຮັບຮອງເອົາການແຕ່ງຕັ້ງຫົວໜ້າວິສະວະກອນ ຕາມການສະເໜີຂອງຜູ້ພັດທະນາເຂື່ອນ;

6. ຊີ້ນໍາການສໍາຫຼວດ ເກັບກໍາຂໍ້ມູນ, ການຂຶ້ນສະຖິຕິກ່ຽວກັບຄວາມປອດໄພຂອງເຂື່ອນໃນຂອບເຂດທົ່ວປະເທດ ລວມທັງສ້າງຖານຂໍ້ມູນຄວາມປອດໄພຂອງເຂື່ອນ;

7. ແຈ້ງເຕືອນ ເພື່ອໃຫ້ຜູ້ພັດທະນາເຂື່ອນປັບປຸງ ຫຼື ແກ້ໄຂບັນຫາທີ່ພົວພັນກັບຄວາມປອດໄພຂອງເຂື່ອນ ໃນກໍລະນີເຫັນວ່າບັນຫາດັ່ງກ່າວ ຈະສົ່ງຜົນເສຍຫາຍຕໍ່ລັດຖະບານ ຫຼື ຄວາມປອດໄພດ້ານ ຊີວິດ, ສຸຂະພາບ ແລະ ຊັບສິນຂອງປະຊາຊົນ;

8. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງຄວາມປອດໄພຂອງເຂື່ອນ;

9. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 65 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບອົງການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມປອດໄພຂອງເຂື່ອນ.

## ໝວດທີ 2
## ການກວດກາວຽກງານຄວາມປອດໄພຂອງເຂື່ອນ

**ມາດຕາ 66 ອົງການກວດກາວຽກງານຄວາມປອດໄພຂອງເຂື່ອນ**

ອົງການກວດກາວຽກງານຄວາມປອດໄພຂອງເຂື່ອນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

**ມາດຕາ 67 ເນື້ອໃນການກວດກາ**

ການກວດກາວຽກງານຄວາມປອດໄພຂອງເຂື່ອນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດຂັ້ນຕອນຂອງການດໍາເນີນວຽກງານຄວາມປອດໄພຂອງເຂື່ອນ;

2. ການປະຕິບັດກໍານົດເວລາຂອງການດໍາເນີນວຽກງານຄວາມປອດໄພຂອງເຂື່ອນ;

3. ການປະຕິບັດບົດວິພາກເສດຖະກິດເຕັກນິກການເງິນກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ;

4. ການປະຕິບັດແຜນການດໍາເນີນງານ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ;

5. ການປະຕິບັດມາດຕະການຄວາມປອດໄພ ທາງດ້ານວິຊາການ;

6. ການປະຕິບັດ ກົດໝາຍ ແລະ ສັນຍາ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ;

7. ການປະຕິບັດມາດຕະຖານອຸປະກອນເຂື່ອນ;

8. ການອອກແບບ, ການກໍ່ສ້າງ, ການຕິດຕັ້ງ ແລະ ການຄຸ້ມຄອງອຸປະກອນ ແລະ ສິ່ງປະກອບສ້າງຂອງເຂື່ອນ;

9. ການນໍາໃຊ້ມາດຕະການ ຈໍາກັດຜົນກະທົບຕໍ່ສິ່ງແວດລ້ອມ;

10. ການໃຊ້ແທນຄ່າເສຍຫາຍຕໍ່ ຊີວິດ, ສຸຂະພາບ, ຊັບສິນຂອງປະຊາຊົນ ແລະ ສິ່ງແວດລ້ອມ;

11. ລະບົບການເງິນ, ນະໂຍບາຍ ແລະ ສະຫວັດດີການສັງຄົມ.

**ມາດຕາ 68 ຮູບການ ການກວດກາ**

ການກວດກາວຽກງານຄວາມປອດໄພຂອງເຂື່ອນມີສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນຂອງອົງການບໍລິຫານຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາຕາມ ຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ, ແຈ້ງການຂອງອົງການບໍລິຫານ, ຄະນະກວດກາແຕ່ລະຂັ້ນ ແລະ ຄໍາສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ໃນການກວດກາວຽກງານຄວາມປອດໄພຂອງເຂື່ອນນັ້ນ ຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມກົດ ໝາຍຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 69 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໃນການເຄື່ອນໄຫວວຽກງານຄວາມປອດໄພຂອງເຂື່ອນ ຈະໄດ້ຮັບການຍ້ອງຍໍສັນລະເສີນ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 70 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 71 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 72 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 1 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ. ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 29 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2022

# ກົດໝາຍວ່າດ້ວຍພິພິທະພັນ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາວຽກງານພິພິທະພັນ ເພື່ອເຮັດໃຫ້ວຽກງານດັ່ງກ່າວເຄື່ອນໄຫວຢ່າງເປັນລະບົບ ແລະ ຖືກຕ້ອງ ແນໃສ່ສະສົມ ທ້ອນໂຮມ, ອະນຸລັກ, ປົກປັກຮັກສາວັດຖຸພັນ, ພັດທະນາ ແລະ ສົ່ງເສີມວຽກງານພິພິທະພັນ ແລະ ປູກຈິດສໍານຶກໃຫ້ປະຊາຊົນລາວບັນດາເຜົ່າມີນໍ້າໃຈຮັກຊາດ, ຮັກມູນເຊື້ອອັນດີງາມຂອງຊາດ, ເປັນພື້ນຖານທາງດ້ານຈິດໃຈ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ພິພິທະພັນ**

ພິພິທະພັນ ແມ່ນສະຖາບັນ ຫຼື ສະຖານທີ່ ທີ່ບໍລິການສັງຄົມໂດຍບໍ່ຫວັງຜົນກໍາໄລ ຊຶ່ງໄດ້ຮັບອະນຸຍາດ ແລະ ສ້າງຕັ້ງຂຶ້ນເພື່ອເປັນບ່ອນສະສົມ ທ້ອນໂຮມ, ຄົ້ນຄວ້າ, ອະນຸລັກ, ປົກປັກຮັກສາ ແລະ ວາງສະແດງວັດຖຸພັນ ເປັນຕົ້ນ ວັດຖຸບູຮານ, ສິລະປະວັດຖຸ ເພື່ອໂຄສະນາເຜີຍແຜ່ປະຫວັດຄວາມເປັນມາ, ມູນເຊື້ອພິລະອາດຫານ, ຄວາມດຸໝັ່ນຂະຫຍັນພຽນຂອງບັນພະບູລຸດ, ຄວາມອຸດົມຮັ່ງມີຂອງຊາດລາວ ແລະ ຮັບໃຊ້ການຄົ້ນຄວ້າ, ວິໄຈ, ສຶກສາ, ຮຽນຮູ້, ອົບຮົມ, ສົ່ງເສີມການທ່ອງທ່ຽວ ແລະ ຈັດກິດຈະກໍາອື່ນທີ່ກ່ຽວຂ້ອງ.

**ມາດຕ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ພິພິທະພັນວິທະຍາ ໝາຍເຖິງການຄົ້ນຄວ້າກ່ຽວກັບວັດຖຸພັນ ຊຶ່ງທຸກຂັ້ນຕອນຕ້ອງປະຕິບັດໃຫ້ຖືກຕ້ອງຕາມຫຼັກວິທະຍາສາດ;

2. ວັດຖຸພັນ ໝາຍເຖິງສິ່ງທີ່ເປັນວັດຖຸ ເປັນຕົ້ນ ພະພຸດທະຮູບ, ອຸປະກອນການຜະລິດ, ອາວຸດເສິກ, ຜົນງານການຄົ້ນຄວ້າວິທະຍາສາດ ແລະ ສິ່ງທີ່ບໍ່ເປັນວັດຖຸ ເປັນຕົ້ນ ສຽງແຄນເຊື້ອຊາດລາວ, ງານບຸນປະເພນີ, ຕໍາລາຢາພື້ນເມືອງ ຊຶ່ງມີຄຸນຄ່າທາງດ້ານວັດທະນະທໍາ, ປະຫວັດສາດ, ທໍາມະຊາດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ປົກປັກຮັກສາຂອງພິພິທະພັນ;

3. ວັດຖຸພັນເຄົ້າເດີມ ໝາຍເຖິງ ວັດຖຸພັນທີ່ເປັນຫຼັກຖານທາງດ້ານວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ, ວິທະຍາສາດ, ເຕັກນິກ ຊຶ່ງໄດ້ເກັບກໍາ, ສະສົມ ທ້ອນໂຮມ, ຂຶ້ນບັນຊີ ແລະ ອະນຸລັກ, ປົກປັກຮັກສາໄວ້ໃນຄັງສາງທໍາພິພິທະພັນ;

4. ສິລະປະວັດຖຸ ໝາຍເຖິງວັດຖຸອັນເປັນຜົນງານສ້າງສັນທີ່ປະກອບດ້ວຍສິລະປະລັກສະນະ ເຊັ່ນ ຮູບແຕ້ມ, ຮູບປັ້ນເຄື່ອງລາຍຄາມ, ເຄື່ອງແກະສະຫຼັກ, ການຖັກແສ່ວ, ສິ່ງທີ່ເຮັດດ້ວຍສີມືຢ່າງປານີດ ແລະ ມີຄຸນຄ່າສູງທາງດ້ານສິລະປະ;

5. ວິລະສະຕີ ໝາຍເຖິງຜູ້ກ້າຫານ, ນັກຮົບ, ຜູ້ມີຄວາມພຽນທີ່ເປັນເພດຍິງ;

6. ອະນຸລັກ ໝາຍເຖິງ ການຮັກສາວັດຖຸພັນໃຫ້ຄົງເດີມ;

7. ເຈົ້າຂອງພິພິທະພັນ ໝາຍເຖິງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງລັດ, ລວມໝູ່, ເອກະຊົນ ຜູ້ກໍ່ຕັ້ງພິພິທະພັນທີ່ຖືກຕ້ອງຕາມກົດໝາຍ;

ອ່ານຕໍ່ສະບັບໜ້າ




# ສະເໜຄຳສອນໃນຜະຫຍາ...

# ດົ້ນກົບເມກ



ສະເໜ ຄຳສອນໃນຜະຫຍາລາວບູຮານນັ້ນ ຜູ້ຂຽນຄິດວ່າ: ຍັງມີຄ່າ ແລະ ປະໂຫຍດຫຼາຍ ທີ່ຄົນລາວຄວນສຶກສານຳໃຊ້ເປັນການຮັກສາ-ຕໍ່ຍອດພູມປັນຍາເກົ່າໃຫ້ເຂົ້າກັບການປ່ຽນແປງໃໝ່ຕາມກະແສໂລກາພິວັດ ເຊິ່ງເຮົາສັງເກດໄດ້ວ່າ ຄຳຜະຫຍາຫຼວງຫຼາຍ ໄດ້ສອນໄວ້ມາດົນນານຮອດທຸກມື້ນີ້ ກໍຍັງມີຄະຕິເຕືອນໃຈບໍ່ຫຼ້າສະໄໝ ບໍ່ໄຮ້ຄ່າທາງປັນຍາ.

ຄຳຜະຫຍາທີ່ເວົ້າສອນໃຫ້ຄິດເຊັ່ນວ່າ: ກາກິນປີງ ໄປຄາຄໍແຮ້ງ ເຮືອຄາແກ້ງ ໄປຫຼົ້ມເຄິ່ງວັງ ພຶດຕິກຳທີ່ມັນເກີດຂຶ້ນແຕ່ໄປກະທົບຈົບລົງໃສ່ຜູ້ອື່ນ ຫຼື ບ່ອນອື່ນນັ້ນ ເປັນຜະຫຍາສອນໃຫ້ຄິດເລິກເຊິ່ງໃສ່ພຶດຕິກຳຕົວຈິງຂອງຄົນໃນສັງຄົມ, ຜູ້ຂຽນຂໍຍົກຕົວຢ່າງບົດຜະຫຍາທີ່ວ່າ: ຢາກກິນເຂົ້າໃຫ້ປູກໃສ່ພະລານຫີນ ຢາກມີສິນໃຫ້ຂ້າພໍ່ຕີແມ່ ຢາກໃຫ້ພີ່ນ້ອງມາແວ່ ຈົ່ງຂ້າໝູ່ດຽວກັນ.

ການເວົ້າກະແທກແດກດັນນັ້ນ ເບິ່ງຄືວ່າຈະຫັກດ້າມພ້າໃສ່ຫົວເຂົ່າ ແຕ່ໃນແງ່ຄວາມເປັນຈິງແລ້ວ ແມ່ນຜູ້ສອນຢາກເນັ້ນໃຫ້ຜູ້ຟັງໄດ້ຄິດຕຶຄວາມເລິກເຊິ່ງ, ໃຊ້ສະຕິປັນຍາຢ່າງຮອບຄອບ ເພາະຊີວິດຈິງບໍ່ມີໃຜຈະປູກເຂົ້າດຳນາໃສ່ພະລານຫີນໄດ້ ແຕ່ເພິ່ນມຸ່ງສອນໃຫ້ໃຊ້ຊີວິດແບບອົດທົນ, ມີຫຼັກການໝັ້ນຄົງ ບໍ່ຄອນແຄນ ຄົນເຮົາຈຶ່ງຈະບັນລຸຄວາມສຳເລັດ ເຊິ່ງຖ້າວ່າຄົນທຳມະດາຈະປູກເຂົ້າເຮັດນາ ເມື່ອຫຼຽວເຫັນພະລານຫີນ ກໍຄິດທໍ້ຖອຍ ສະແດງວ່າໃຈບໍ່ສູ້, ໃຈລົ້ມເລີກຕໍ່ອຸປະສັກທີ່ເກີດຂຶ້ນ ຍ່ອມບໍ່ເຫັນຜົນສຳເລັດ, ຢາກມີສິນໃຫ້ຂ້າພໍ່ຕີແມ່ ເພິ່ນໝາຍເຖິງພໍ່ແມ່ຄືໂຕກິເລດຕັນຫາທີ່ຊັກພາຊີວິດໃຫ້ເສົ້າໝອງ-ເສື່ອມສູນ ເຮົາຕ້ອງໄດ້ຂ້າຕັດຖິ້ມເທື່ອລະໜ້ອຍ ໃຫ້ຮັກສາໄວ້ແຕ່ສິນ ທີ່ເປັນເຄື່ອງຄໍ້າປະກັນສັນຕິສຸກໃນສັງຄົມ, ຢາກໃຫ້ພີ່ນ້ອງມາແວ່ຈົ່ງຂ້າໝູ່ດຽວກັນ ຄືຂ້າຄວາມຂີ້ຖີ່ ໃຈແຄບ ບໍ່ເອື້ອເຟື້ອ, ຖ້າຄົນບໍ່ເຂົ້າໃຈເລິກ ກໍຈະຄິດວ່າ ຄົນບູຮານເວົ້າບໍ່ມີເຫດຜົນ.

ຜູ້ຂຽນຈຶ່ງຂໍສັງລວມແບບສັ້ນໆວ່າ ຄຸນຄ່າຄວາມຄິດໃນຄຳຜະຫຍາບູຮານນັ້ນ ຍາມໃດກໍຍັງນຳມາໃຊ້ໄດ້ ເຊິ່ງຂຶ້ນຢູ່ກັບຜູ້ມີປັນຍາ; ຜູ້ໃຫ້ຄ່າຄວາມສຳຄັນໃນພູມປັນຍາບັນພະບຸລຸດຂອງຕົນເອງ ແຕ່ຖ້າໄປເບິ່ງເຫັນແຕ່ຂອງຄົນອື່ນວ່າດີກວ່າ ຄືງບໍ່ຕ່າງກັບການໄດ້ເຕົ່າແລ້ວລືມໜາ!

ສະເໜີແລກປ່ຽນ.

# ວັນສຳຄັນຂອງຊາດ

ໂດຍ: ຜູ້ອື່ນ

ທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ, ທົ່ວກອງທັບ ແລະ ທົ່ວປວງຊົນລາວທັງຊາດ ພວມອອກແຮງແຂ່ງຂັນກັນສ້າງຜົນງານຕ້ອນຮັບວັນສະຖາປະນາ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ກໍຄືວັນຊາດ 2 ທັນວາ ຄົບຮອບ 48 ປີ ແລະ ວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 103 ປີ ໃນ ປີ 2023 ນີ້; ພວກເຮົາໄດ້ນຳເອົາມູນເຊື້ອ ແລະ ຄວາມໝາຍຄວາມສຳຄັນຂອງວັນຊາດ 2 ທັນວາ ມາທົບທວນຫວນຄືນ ເພື່ອພ້ອມກັນເຊີດຊູນໍ້າໃຈຮັກຊາດ, ເອກະລາດເປັນເຈົ້າຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອສ້າງປະເທດຊາດໃຫ້ໝັ້ນຄົງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງຍຸຕິທຳ ແລະ ສີວິໄລ.

ຄືດັ່ງພວກເຮົາຮູ້ນຳກັນແລ້ວວ່າ, ຊາດລາວແມ່ນຊາດໜຶ່ງທີ່ມີປະຫວັດສາດອັນຍາວນານຫຼາຍພັນປີ, ມີມູນເຊື້ອສະຫງ່າອົງອາດ, ຕໍ່ສູ້ຕ້ານການຮຸກຮານຂອງສັດຕູພາຍນອກ ແລະ ສ້າງສາພັດທະນາ. ໂດຍສືບທອດມູນເຊື້ອອັນອົງອາດຂອງບັນພະບຸລຸດ, ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ສາມັກຄີກັນຕໍ່ສູ້ຢ່າງພິລະອາດຫານ ຕ້ານການຮຸກຮານ ແລະ ການຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນທັງແບບເກົ່າ ແລະ ໃໝ່ ສາມາດປົດປ່ອຍປະເທດຊາດຢ່າງມີໄຊ, ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ ປີ 1975 ລັດປະຊາທິປະໄຕ ປະຊາຊົນ ແມ່ນລັດທີ່ເກີດຈາກການຕໍ່ສູ້ ເສຍສະຫຼະອັນໃຫຍ່ຫຼວງຂອງປະຊາຊົນລາວບັນດາເຜົ່າ, ແມ່ນລັດທີ່ມາຈາກປະຊາຊົນ, ແມ່ນລັດແຫ່ງອຳນາດຂອງປະຊາຊົນ, ເພື່ອຜົນປະໂຫຍດຂອງປະຊາຊົນ.

ວັນທີ 2 ທັນວາ ປີ 1975 ແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ທີ່ຍືດເຍື້ອຍາວນານເປັນພັນປີຂອງຊາດລາວເຮົາ ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າໄດ້ມີສິດເສລີພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ, ແມ່ນວັນທີ່ປະເທດລາວໄດ້ມີເອກະລາດຢ່າງສົມບູນ ແລະ ມີອະທິປະໄຕຢ່າງຄົບຖ້ວນ, ມີທີ່ຕັ້ງອັນສົມກຽດ ແລະ ມີຖານະເທົ່າທຽມກັບປະເທດອື່ນໆໃນເວທີສາກົນ ກໍຄືປະຊາຄົມໂລກ. ວັນທີ 2 ທັນວາ ແມ່ນວັນແຫ່ງສັນຕິພາບ, ແຫ່ງການກ້າວສູ່ຍຸກສະໄໝແຫ່ງການສ້າງປະເທດລາວໃຫ້ມີສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນາຖາວອນ.

ປະທານ ໄກສອນ ພົມວິຫານ ໄດ້ຕີລາຄາວັນທີ 2 ທັນວາ 1975 ເອົາໄວ້ວ່າ: ບໍ່ທັນມີເວລາໃດທີ່ປະຊາຊົນເຮົາ ເຊິ່ງເປັນຜູ້ສ້າງປະຫວັດສາດຂອງຊາດນັ້ນ ໄດ້ຍາດເອົາໄຊຊະນະສົມບູນ, ເຖິງຖອງ ແລະ ບໍລິບູນໄດ້ຢ່າງສະຫງ່າລາສີຄືແນວນີ້ຈັກເທື່ອ ໄຊຊະນະນັ້ນ ບໍ່ສະເພາະແຕ່ໄດ້ຟື້ນຟູຄວາມເປັນເອກະລາດຂອງປະເທດເຮົາ ຫາກຍັງເປັນຄັ້ງທຳອິດທີ່ປະຊາຊົນລາວບັນດາເຜົ່າຜູ້ເຄີຍດຳລົງຊີວິດເປັນທາດໃນເມື່ອກ່ອນ ໄດ້ກາຍມາເປັນເຈົ້າຂອງແທ້ຈິງຂອງຊາດໜຶ່ງທີ່ມີເອກະລາດ, ສິດເສລີພາບຢ່າງສົມບູນ ແລະ ພວມກ້າວຂຶ້ນສູ່ສັງຄົມນິຍົມ, ເຮັດໃຫ້ຄວາມມຸ່ງຫວັງອັນແຮງກ້າຂອງປວງຊົນລາວ ກໍຄືຂອງມວນມະນຸດ ປາກົດເປັນຈິງ ຢູ່ບົນຜືນແຜ່ນດິນອັນແສນຮັກຂອງພວກເຮົາ.

ການກະກຽມໃຫ້ແກ່ການສະເຫຼີມສະຫຼອງວັນຊາດ 2 ທັນວາ, ຄົບຮອບ 48 ປີ ໃນປີນີ້ ເປັນໄລຍະເວລາທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດ ພວມຊຸ້ນຂ້ຽວສຸມໃສ່ການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະໃນປີນີ້ກໍເປັນປີແຫ່ງກາງສະໄໝຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະ ເປັນປີໜຶ່ງທີ່ພວກເຮົາຍັງມີຄວາມທ້າທາຍບໍ່ໜ້ອຍກວ່າປີຜ່ານມາ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ໄດ້ຮັບຜົນກະທົບພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ 19 ແຕ່ເຖິງຢ່າງໃດກໍຕາມ, ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວ ກໍໄດ້ສຸມທຸກເຫື່ອແຮງຄວາມເອົາໃຈໃສ່ ຜ່ານຜ່າທຸກສະພາບຄວາມຫຍຸ້ງຍາກ-ສິ່ງທ້າທາຍ ແລະ ມີຜົນສຳເລັດພົ້ນເດັ່ນໃນຫລາຍດ້ານ.




# ວິທີເຮັດວຽກ

## ພາກທີ 4

## ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

ມັນເປັນແນວດຽວກັນກັບຄົນຜູ້ທີ່ເຄີຍທ້ອງຂີ້ພິງຢູ່ໝົດມື້ໝົດຄືນ, ຍ້ອນມີຂີ້ຕົມ, ມີກິ່ນເໝັນຂອງຝຸ່ນຕິດຕົວຢູ່. ສິ່ງທີ່ເປັນແນວນັ້ນ ກໍບໍ່ມີຫຍັງແປກປະຫຼາດ ເພາະວ່າປົນຢູ່ນຳຂີ້ຕົມຍ່ອມມີຕົມຕິດ ແລະ ຈຳເປັນຕ້ອງລ້າງສ່ວຍຂີ້ຕົມນັ້ນອອກຈາກຕົນຕົວເຮົາຈຶ່ງຈະສະອາດ ຖ້າວ່າທ່ອງຂີ້ຕົມ ແລະ ບໍ່ມີກິ່ນຂີ້ຕົມຕິດນັ້ນ ຈຶ່ງເປັນສິ່ງແປກປະຫຼາດ. ຖ້າວ່າພາຍໃນພັກຂອງພວກເຮົາ ອັນເປັນພັກທີ່ຫາກໍຍ່າງອອກຈາກສັງຄົມເກົ່າມາ ແຕ່ບໍ່ມີຄົນຊົ່ວຈັກຄົນ ແລະ ບໍ່ມີສິ່ງຊົ່ວຈັກຢ່າງນັ້ນ ຈຶ່ງເປັນຂອງແປກປະຫຼາດ. ຈິງຢູ່ ເວົ້າແນວນັ້ນກໍບໍ່ແມ່ນວ່າ ເວົ້າເພື່ອພ້ອມເອົາຕົວເອງ.

ພັກເຮົານີ້ດ້ານໜຶ່ງຕ້ອງເຮັດໜ້າວຽກປະຕິວັດ, ດ້ານໜຶ່ງຕ້ອງອົບຮົມສັ່ງສອນສະມາຊິກ, ພະນັກງານຂອງພັກ ເດັດດ່ຽວແກ້ໄຂປ່ຽນແປງເອົາພວກຄົນຊົ່ວ, ແກ້ໄຂດັດແປງນິໄສທີ່ຍັງຄົງຄ້າງຢູ່ນັ້ນ ໃຫ້ກາຍມາເປັນອັນດີຂຶ້ນ, ຕ້ອງພະຍາຍາມແກ້ໄຂຕັ້ງແຕ່ກົກຮາກຂອງພະຍາດທັງຫຼາຍ ເຮັດໃຫ້ພັກນັບມື້ນັບໄດ້ຮັບຄວາມສຸກ ແລະ ເຂັ້ມແຂງ.

**8. ວິທີຄວນເຮັດຕໍ່ຂໍ້ບົກພ່ອງຕ່າງໆ.**

ຍ້ອນວ່າພັກຂອງພວກເຮົາມັນໃຫຍ່ຫຼາຍ, ມີສະມາຊິກຫຼາຍ, ແຕ່ລະຄົນພັດຍັງມີນິດໄສຊິ້ນເຄີຍ ມີກິລິຍາມາລະຍາດ ມີຄວາມມັກ ຄວາມຊອບ ມີລະດັບຄວາມຕື່ນຕົວການຮັບຮູ້ຕ່າງກັນ, ເປັນຕົ້ນໃນເວລາທີ່ຂະບວນການປະຕິວັດ ຟົດເດືອດ ແລະ ພົບສະພາບການແວດລ້ອມອັນຍາກລຳບາກ ການແຕກຕ່າງກັນນັ້ນ ກໍຍິ່ງເດັ່ນຊັດຈະແຈ້ງຂຶ້ນ ແລະ ຍິ່ງຂັດແຍ່ງກັນຢ່າງເດືອດຂຶ້ນຕື່ມອີກ.

ພວກເຮົາຈະຄວນແກ້ໄຂຂໍ້ຂັດແຍ່ງອັນນັ້ນແນວໃດ? ບາງຄົນເວົ້າວ່າ ພາຍໃນພັກຂອງພວກເຮົາ ອັນໃດກໍຂາດຕົກບົກພ່ອງໝົດ, ເຕັມໄປແຕ່ຂໍ້ບົກພ່ອງ ດັ່ງນັ້ນກໍເລີຍວິຕົກ, ທໍ້ຖອຍໃຈຈົນເຖິງໝົດຫວັງໄປ. ວິທີສັງເກດສອງຢ່າງດັ່ງກ່າວຂ້າງເທິງນັ້ນ ລ້ວນແຕ່ບໍ່ຖືກທັງມວນ, ຄວາມຈິງມີດັ່ງນີ້:

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
| --- | --- |
| ຫງ່ວງຫົວ | ງ່ວງຫົວ |
| ງ່ວງປາ | ຫງ່ວງປາ |
| ປາຖະກະຖາ | ປະຖະກາຖາ |
| ປະຖະພີ | ປາຖະພີ |
| ຜົນປະໂຫຍດ | ຜົນປະໂຍດ |
| ຫຼາຍສິບໂຍດ | ຫຼາຍສິບໂຫຍດ |
| ໂລງສົບ | ໂຮງສົບ |
| ໂຮງກຶງ | ໂລງກຶງ |



## ສຸກສະບາຍທາຍໂລດ

# ປະໂຫຍດທີ່ບໍ່ຄວນເບິ່ງຂ້າມ

ໂດຍ: ສາວແອ່ນ



**ສ່ວນສີຂາວຂອງໝາກໂມ:** ສ່ວນສີຂາວໃກ້ເປືອກໝາກໂມ ມີສານຊີຣູລາຍ (ciruline) ທີ່ເປັນກົດອະມິໂນທີ່ດີຕໍ່ສຸຂະພາບ ແລະ ຫຼອດເລືອດໃນຮ່າງກາຍ ສ່ວນທີ່ເປັນສີຂາວນັ້ນ ສາມາດເຮັດອາຫານແຊບໆເຊັ່ນ: ຕຳ ຫຼື ຕົ້ມເຊັ່ນ: ແກງສົ້ມກໍໄດ້.

**ເສັ້ນໄຍທີ່ຢູ່ນຳໝາກກ້ຽງ:** ເສັ້ນໄຍໃນໝາກກ້ຽງ ທີ່ເຮົາມັກຈະດຶງອອກ ແລະ ແກະຖິ້ມກ່ອນກິນນັ້ນ ມີປະໂຫຍດຕໍ່ຮ່າງກາຍ ເພາະມີສານຕ້ານອະນຸມູນອິດສະຫຼະ ແລະ ມີເສັ້ນໄຍທີ່ດີຕໍ່ລະບົບຂັບຖ່າຍ.

**ໃບກາຫຼົດ:** ທ່ານຮູ້ບໍ່ວ່າ ໃບຂອງກາຫຼົດ ມີວິຕາມິນຊີຫຼາຍກວ່າຫົວທີ່ເຮົາກິນ ນອກນັ້ນ, ໃບກາຫຼົດຍັງມີວິຕາມິນເຄ ແລະໂພແທດຊຽມນຳອີກ ທ່ານລອງນຳມາເຮັດອາຫານ ເມນູງ່າຍໆ ເຊັ່ນໃບກາຫຼົດຂົ້ວກັບໄຂ່.

**ກ້ານຜັກບ້ອກໂກລີ:** ບາງຄົນບໍ່ມັກກິນກ້ານບ້ອກໂຄລີ ເພາະວ່າມັນແຂງ ແລະ ຣົດຊາດບໍ່ແຊບປານໃດ ແຕ່ຕົວຈິງແລ້ວກ້ານບ້ອກໂຄລີມີວິຕາມິນຫຼາຍ ແລະ ມີເສັ້ນໄຍທີ່ອັດແໜ້ນນຳອີກ.

**ເປືອກໝາກໂປມ:** ຫຼາຍທ່ານເລືອກທີ່ຈະປອກເປືອກໝາກໂປມອອກ ເພື່ອຣົດຊາດທີ່ແຊບ ແລະ ຮູ້ສຶກສະອາດ ແຕ່ຄວາມຈິງແລ້ວເປືອກໝາກໂປມ ອຸດົມໄປດ້ວຍສານຕ້ານອະນຸມູນອິດສະຫຼະ ທີ່ມີສ່ວນຊ່ວຍໃນການຕ້ານມະເຮັງ ແຕ່ຖ້າເປັນຫ່ວງວ່າເປືອກຂອງໝາກໂປມອາດຈະມີການເຄືອບສານເຄມີ ກໍສາມາດລ້າງໃຫ້ສະອາດໄດ້ ດ້ວຍການປະສົມນ້ຳໝາກນາວກັບເບກກິ້ງໂຊດາ ແລ້ວລ້າງອອກດ້ວຍນ້ຳສະອາດ ກ່ອນທີ່ຈະຮັບປະທານກິນໝາກໂປມ.

**ຂໍ້ມູນຈາກ:**
**www.sanook.com**

ອາດ
ກະວີລາວ

## 2 ທັນວາມະຫາໄຊ

**# ສາຍນ້ຳອູແດນງາມ**

※ 2 ທັນວາ ຊ່າກ້ອງ ໄປທົ່ວໂລກາ
2 ທັນວາ ມີໄຊ ເດັ່ນງາມໃສແຈ້ງ
2 ທັນວາ ໂຮມແຮງສູ້ ລາວມີເອກະລາດ
2 ທັນວາ ປະກາດກ້ອງ ວ່າລາວເຮົາເກັ່ງກ້າ ຕີຕ້ານໝູ່ມານ

※ 2 ທັນວາ ເອກອ້າງ ຊົມຊື່ນຍິນດີ
ສາມັກຄີສະຫຼອງໄຊ ເຜົ່າຊົນຊາວເຊື້ອ
ນັບແຕ່ເໜືອເຖິງໃຕ້ ໂຮມໃຈເປັນໜຶ່ງ
ຮັກຫອມລາວຖິ່ນນີ້ ເໝືອນລູກແຄນມີທ່າງເຕົ້າ ທຽມຂ້າງສູ່ຍາມ ນັ້ນແລ້ວ

※ 2 ທັນວາ ຮຸ່ງແຈ້ງ ແສງສ່ອງເຮືອງໃສ
ພັກໄດ້ນຳພາລາວ ປັບປຸງແປງສ້າງ
ວາງທິດທາງເບື້ອງຊີ້ ແນວດີເສີມສົ່ງ
ຫວັງປະສິງບ່ອນບັ້ນ ລາວນີ້ຮຸ່ງວິໄລ

※ ສີ່ສິບປາຍປີລ່ວງລ້ຳ ເຫັນບ່ອນຜົນງານ
ຂັ້ນຮາກຖານທັງຕົວເມືອງ ນັບວັນຈະເລີນກ້າວ
ການສຶກສາຂະຫຍາຍກ້ວາງ ແດນດອຍໄກຫ່າງ
ມີໂຮງຮຽນໃຫຍ່ນ້ອຍ ປະຊາໄດ້ຮໍ່າຮຽນ ແທ້ນາ

※ ສຸກສາລາມີຢູ່ຢັ້ງ ຮອງຮັບບໍລິການ
ທະນາຄານ ໂຮງງານ ບ່ອນຄືນຂາຍຄ້າ
ນ້ຳປະປາ ໄຟຟ້າ ຫົນທາງທຽວທ່ອງ
ເສດຖະກິດດຸ່ງກ້າວ ການເມືອງໝັ້ນທ່ຽງສະຖຽນ ຊອບແລ້ວ

※ ທາງສຽງຊົມຍົກຍ້ອງ ລາວເດັ່ນສວຍງາມ
ປຸນປານດຽວດວງເດືອນ ຄູ່ຄຶງຄຽງຟ້າ
ຈຳປາລາວບານເອ້ ງາມສົມຄຳກ່າວ
ພັກ-ລັດເຮົາສະຫຼາດຮູ້ ນຳພາຊູຊ່ອຍສ້າງຊາດ ລາວກ້າວຮຸ່ງຈະເລີນ ແທ້ແລ້ວ






## ໜັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

※ **ຊົມເຊີຍ**ນ້ຳໃຈວັນຊາດທີ **2 ທັນວາ** ຄົບຮອບ 48 ປີທີ່ໄດ້ໝູນວຽນມາບັນຈົບອີກວາລະໜຶ່ງ ຊຶ່ງຫຼາຍພາກສ່ວນ ມີການຕົບແຕ່ງເອ້ ປະດັບຮຸ່ງເຮືອງໃສ ທັງນອກ-ໃນອາຄານ ດອກດວງປະດັບເອ້ **ຄໍາຂົວນຊົມເຊີຍຍ້ອງ**ຄຸນຄວາມດີຂອງພັກ-ລັດ **ປະຊາສຸກລາບລົ້ນ** ຜ່ານຄືນວັນວັນໂຫດຮ້າຍ **ມີໄຊກ້າສະຫງ່າງາມ ຊົມເຊີຍ!**

※ **ເພື່ອ**ຕອບສະໜອງຕາມຈຸດປະສົງ ແລະ ຄວາມຮຽກຮ້ອງຕ້ອງການ ໃນການພັດທະນາ **ເຂດສາມຫຼ່ຽມພັດທະນາ CLV** ທີ 6-7 ທັນວາ 2023 ກອງປະຊຸມ ພາຍໃຕ້ຫົວຂໍ້ **"ເພີ່ມທະວີບົດບາດຂອງລັດຖະສະພາ ໃນການສົ່ງເສີມການຮ່ວມມືຮອບດ້ານ ລະຫວ່າງ ກຳປູເຈຍ-ລາວ-ຫວຽດນາມ"** ໄດ້ເປີດເລີ່ມ ໄຂລົ້ນເປັນທາງການ ລັດຖະບານທັງສາມ ປະເທດໂຮມແຮງສ້າງ ເຊັນສັນຍາສົ່ງເສີມເລື່ອງ**ການພັດທະນາເຂດສາມຫຼ່ຽມ** ລາວ-ຫວຽດນາມ-ກຳປູເຈຍເພື່ອແກ້ **ບັນຫາເລື່ອງຝືດເຄືອງ ຊົມເຊີຍ!**

## ຊອບຍິ້ມ

# ແອ່ນຕຸ້ງ

### ບໍ່ໄດ້ດຶກ

ມື້ໜຶ່ງ ມີເດັກນ້ອຍສາມຄົນໄປທ່ຽວສວນສັດ ພາກັນເລາະເບິ່ງແຂ້ຢູ່ແຄມໜອງ ແລະ ກໍພາກັນດຶກກ້ອນຫີນໃສ່, ຍ້ອນແຂ້ທິວເລີຍໃຈຮ້າຍ ຈຶ່ງໂດດເຂົ້າມາແຄມໜອງ, ສອງຄົນແລ່ນປົບ ແລະ ອີກຄົນໜຶ່ງຍືນເສີຍແບບບໍ່ຢ້ານ, ໝູ່ສອງຄົນເຫັນກະເລີຍຮ້ອງມາໃສ່ : ຮີບແລ່ນໜີທະແມ ມຶງບໍ່ຢ້ານຕາຍຫວາ?

**ຜູ້ກ່ຽວ:** ກູຊິປົບໃຫ້ເມື່ອຍເຮັດຫຍັງ ແນວກູບໍ່ໄດ້ດຶກກ້ອນຫີນໃສ່ມັນ!!!



## ຄະຕິເຕືອນໃຈ

*#ດອກຫຍ້າ*

ເຮືອຈະປອດໄພ ເມື່ອຈອດໄວ້ຢູ່ທ່າ
ເຮືອຈະໄຮ້ຄ່າ ຫາກຈອດທຽບທ່າພຽງຢ່າງດຽວ




# ບຸກຄົນ- ນິຕິບຸກຄົນ

"ບຸກຄົນ" ແລະ "ນິຕິບຸກຄົນ" ເປັນຄຳທີ່ປາກົດເຫັນໃຊ້ໃນເອກະສານ ຫຼືແຈ້ງການທາງການເລື້ອຍໆ. ທັງສອງຄຳນີ້ມີຄວາມໝາຍຕ່າງກັນ ດັ່ງນີ້:

"ບຸກຄົນ" ເປັນຄຳນາມຈາກເຄົ້າປາລີ Puggala ປຸດຄະລະ ໝາຍເຖິງ "ປັດເຈກຊົນ, ບຸກຄົນ, ຄົນ" ແລ້ວແປງເປັນສຽງລາວວ່າ "ບຸກຄົນ" ໝາຍເຖິງ "ຄົນ (ສະເພາະແຕ່ລະຄົນ)" ເຊັ່ນ

- ຄຳແດງມັກຊື້ປຶ້ມກ່ຽວກັບປະຫວັດບຸກຄົນສຳຄັນຂອງໂລກມາອ່ານ.
- ຂ້ອຍມານີ້ໃນນາມສ່ວນບຸກຄົນເດີ, ບໍ່ແມ່ນມາໃນນາມການຈັດຕັ້ງໄດ໋!
- ດວງເຮັງເປັນບຸກຄົນທີ່ຂ້ອຍຢາກພົບ ເພື່ອຈະໄດ້ແລກປ່ຽນບົດຮຽນໃນການຂຽນເລື່ອງສັ້ນ.

ພ້ອມກັນນັ້ນ, ໃນປະມວນຄຳສັບກົດໝາຍໄດ້ໃຫ້ຄວາມໝາຍ "ບຸກຄົນ" ວ່າ "ຜູ້ທີ່ມີສິດ ແລະພັນທະຕາມກົດໝາຍ" ເຊັ່ນ

- ທະນາຄານແຫ່ງນີ້ສະໜອງສິນເຊື່ອ ເພື່ອເປັນທຶນໝູນວຽນ ດ້ວຍອັດຕາດອກເບ້ຍພິເສດສຳລັບລູກຄ້າວິສາຫະກິດ ແລະບຸກຄົນທີ່ທຳການຜະລິດ.
- ໃນລະບອບສັງຄົມນິຍົມແຕ່ລະບຸກຄົນແມ່ນໄດ້ຮັບການປົກປ້ອງໃນລະບົບການເບິ່ງແຍງສຸຂະພາບຢ່າງເທົ່າທຽມກັນ.

"ນິຕິບຸກຄົນ"ເປັນຄຳປະສົມປະເພດຄຳນາມຈາກເຄົ້າປາລີ ປະກອບດ້ວຍຄຳວ່າ Niti ນິຕິ ໝາຍເຖິງ "ກົດໝາຍ" ແລະ Puggala ປຸດຄະລະ ແລ້ວແປງສຽງເປັນລາວວ່າ "ບຸກຄົນ" ໝາຍເຖິງ "ຄົນ (ສະເພາະແຕ່ລະຄົນ)". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ນິຕິບຸກຄົນ" ກໍໝາຍເຖິງ "ກຸ່ມບຸກຄົນ, ອົງການ ຫຼືບໍລິສັດ ມີສິດແລະພັນທະທີ່ກຳນົດໄວ້ໃນກົດໝາຍ" ເຊັ່ນ

- ກະຊວງການເງິນໄດ້ແຈ້ງການເຖິງບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ເປັນເຈົ້າຂອງ ຫຼືນຳໃຊ້ຍານພາຫະນະທຸກປະເພດໃນຂອບເຂດທົ່ວປະເທດ ກ່ຽວກັບເລື່ອງການໃຊ້ແບບພິມໃບເສຍຄ່າທຳນຽມທາງແບບໃໝ່.

ຢູ່ໃນກົດໝາຍວ່າດ້ວຍການຄຸ້ມຄອງສ່ວນສາທາລະນະ (ສະບັບປັບປຸງ) ປີ 2019 ໄດ້ໃຫ້ຄຳນິຍາມ "ນິຕິບຸກຄົນ" ໝາຍເຖິງ "ຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ ຫຼືການຈັດຕັ້ງທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ເຊິ່ງມີຊື່, ສະຖານທີ່ຕັ້ງສຳນັກງານ, ມີຊັບສົມບັດເປັນຂອງຕົນເອງ, ມີສິດ ແລະ ພັນທະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ".




# ອົດສະຕຣາລີ ກຽມຫ້າມນຳເຂົ້າຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ໃນປີ 2024



ເມື່ອບໍ່ດົນມານີ້ມີລາຍງານຂ່າວໃຫ້ຮູ້ວ່າ: ທ່ານ ມາກ ບັດເລີ ລັດຖະມົນຕີກະຊວງສາທາລະນະສຸກຂອງອົດສະຕຣາລີ ກ່າວວ່າ: ນັບຕັ້ງແຕ່ປີ 2024 ເປັນຕົ້ນໄປ ການນຳເຂົ້າຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ເປັນສິ່ງທີ່ຜິດກົດໝາຍໃນອົດສະຕຣາລີ.

ທ່ານກ່າວວ່າ: ມາດຕະການຫ້າມນຳເຂົ້າຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ມັງກອນ 2024 ເພື່ອຫວັງຫຼຸດຜ່ອນພຶດຕິກຳການໃຊ້ຢາສູບໄຟຟ້າຂອງເຍົາວະຊົນ ເຊິ່ງຢູ່ໃນລະດັບທີ່ໜ້າເປັນຫ່ວງ. ທັງນີ້, ຢາສູບໄຟຟ້າສ່ວນຫຼາຍຍັງຄົງມີສ່ວນປະສົມຂອງນິໂຄຕິນ ທີ່ເປັນສານເສບຕິດ ແລະ ຜົນສຳຫຼວດຂອງລັດຖະບານອົດສະຕຣາລີພົບວ່າ: ປະມານ 1 ໃນ 7 ຂອງປະຊາກອນທີ່ມີອາຍຸລະຫວ່າງ 14-17 ປີ ໃນປະເທດໃຊ້ຢາສູບໄຟຟ້າ. ຍິ່ງໄປກວ່ານັ້ນ, ພາກລັດຍັງມີຜົນການສຶກສາ ເຊິ່ງຊີ້ໃຫ້ເຫັນຢ່າງແນ່ນອນວ່າ ການໃຊ້ຢາສູບໄຟຟ້າໃນເດັກນ້ອຍ ແລະ ເຍົາວະຊົນ ເພີ່ມໂອກາດປະມານສາມເທົ່າທີ່ບຸກຄົນນັ້ນຈະສູບຢາສູບໃນອະນາຄົດ. ຂະນະດຽວກັນ, ລັດຖະບານອົດສະຕຣາລີກຽມສະເໜີກົດໝາຍຫ້າມການຜະລິດ, ໂຄສະນາ ແລະ ຈຳໜ່າຍຢາສູບໄຟຟ້າແບບໃຊ້ແລ້ວຖິ້ມໃນປີ 2024.

ອົດສະຕຣາລີ ເປັນປະເທດທຳອິດຂອງໂລກທີ່ໃຊ້ກົດໝາຍຢາສູບຊອງເປົ່າ ໃນປີ 2012 ຄືບໍ່ລະບຸເຄື່ອງໝາຍການຄ້າຂອງບໍລິສັດຜູ້ຜະລິດ ແຕ່ໃຫ້ສະແດງພາບຜົນກະທົບຕໍ່ສຸຂະພາບທີ່ເປັນຜົນເສຍຈາກການສູບຢາ. ນອກຈາກນີ້, ການທີ່ລັດຖະບານອົດສະຕຣາລີເກັບພາສີຢາສູບໃນອັດຕາສູງສົ່ງຜົນໃຫ້ລາຄາຢາສູບແພງເຖິງຊອງລະປະມານ 50 ໂດລາອົດສະຕຣາລີ.

# ສີລັງກາ ຍົກເວັ້ນຄ່າທຳນຽມວີຊາໃຫ້ແກ່ນັກທ່ອງທ່ຽວ

ໃນທ້າຍເດືອນພະຈິກຜ່ານມາ, ສຳນັກງານກວດຄົນເຂົ້າເມືອງ ແລະ ການຍ້າຍຖິ່ນຖານຂອງສີລັງກາ ໄດ້ປະກາດຍົກເວັ້ນຄ່າທຳນຽມວີຊາສຳລັບຜູ້ທີ່ອາໄສຢູ່ໃນ ຈີນ, ອິນເດຍ, ອິນໂດເນເຊຍ, ຣັດເຊຍ, ໄທ, ມາເລເຊຍ ແລະ ຍີ່ປຸ່ນ ໂດຍເລີ່ມບັງຄັບໃຊ້ທັນທີ ແລະ ມີຜົນຈົນເຖິງວັນທີ 31 ມີນາ 2024.




ຜູ້ທີ່ອາໄສຢູ່ປະເທດດັ່ງກ່າວ ເຊິ່ງມີໜັງສືເດີນທາງທາງການທູດ, ໜັງສືເດີນທາງທາງລັດຖະການ ແລະ ໜັງສືເດີນທາງແບບທຳມະດາ ມີຄຸນສົມບັດຮ່ອມກັບໂຄງການດັ່ງກ່າວ ແລະ ຕ້ອງຍື່ນເອກະສານໃນລະບົບອະນຸມັດການເດີນທາງທາງອີເລັກໂຕຣນິກ (ETA) ທີ່ບໍ່ເສຍຄ່າໃຊ້ຈ່າຍກ່ອນເດີນທາງໄປເຖິງສີລັງກາ. ພາຍໃຕ້ໂຄງການທົດລອງທີ່ມີຂຶ້ນ ເພື່ອສ້າງອຸດສາຫະກຳການທ່ອງທ່ຽວຂຶ້ນມາໃໝ່ນີ້ ນັກທ່ອງທ່ຽວຈະໄດ້ຮັບວີຊາໄລຍະ 30 ວັນ ແລະ ສາມາດເດີນທາງເຂົ້າ-ອອກໄດ້ສອງຄັ້ງນັບຕັ້ງແຕ່ວັນທີ່ເດີນທາງເຖິງສີລັງກາຄັ້ງທຳອິດພາຍໃນ 30 ວັນ.

ການທ່ອງທ່ຽວຖືວ່າເປັນໜຶ່ງໃນແຫຼ່ງລາຍໄດ້ເງິນຕາຕ່າງປະເທດທີ່ສຳຄັນຂອງສີລັງກາ ເຊິ່ງກຳລັງເດີນໜ້າກະຕຸ້ນລາຍໄດ້ຈາກການທ່ອງທ່ຽວທີ່ຖົດຖອຍໃນລະຫວ່າງປີ 2020-2022 ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ວິກິດເສດຖະກິດ.

# ຫຼາຍປະເທດ ໃຫ້ຄຳໝັ້ນສັນຍາ ຜະລິດທັນຍາພືດ ເຂົ້າແຜນການຫຼຸດຜ່ອນມົນລະພິດ

ເມື່ອອາທິດຜ່ານມາ ໄດ້ມີການລາຍງານຂ່າວວ່າ: ກອງປະຊຸມ ຄັ້ງທີ 28 ບັນດາຝ່າຍເຂົ້າຮ່ວມສົນທິສັນຍາແມ່ຂອງອົງການສະຫະປະຊາຊາດກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ (COP28) ຈັດຂຶ້ນຢູ່ນະຄອນດູໄບຂອງສະຫະນະຄອນເອມີເຣັດ ອາຣັບ ໂດຍມີຜູ້ແທນ ຈຳນວນ 134 ປະເທດຈາກທົ່ວໂລກ ໄດ້ເຫັນດີເປັນເອກະພາບ ກ່ຽວກັບບັນຫາສະບຽງອາຫານ, ທັນຍາພືດ ແລະ ກະສິກຳ ເຂົ້າໃນແຜນການເຄື່ອນໄຫວດິນຟ້າອາກາດແຫ່ງຊາດ. ບັນດາປະເທດດັ່ງກ່າວ ໄດ້ຜະລິດທັນຍາພືດ ຈຳນວນ 70% ໃນທົ່ວໂລກ.




ຖະແຫຼງການຮ່ວມນັ້ນ ໄດ້ເນັ້ນໜັກບຸລິມະສິດການພັດທະນາລະບົບທັນຍາພືດ, ສະບຽງອາຫານ ແລະ ກະສິກຳ ແບບຍືນຍົງ ແລະ ການປັບຕົວກັບການປ່ຽນແປງຂອງດິນຟ້າອາກາດ. ພ້ອມກັນນັ້ນ, ຢັ້ງຢືນວ່າ ຈະເພີ່ມທະວີການຫັນປ່ຽນລະບົບສະບຽງອາຫານ, ຕິດພັນຄວາມມານະພະຍາຍາມນີ້ ກັບແຜນການແຫ່ງຊາດ ກ່ຽວກັບການຫຼຸດຜ່ອນມົນລະພິດ. ນອກຈາກນັ້ນ, ບັນດາປະເທດກໍເຫັນດີເປັນເອກະພາບໃນການອຸດໜູນຊ່ວຍເຫຼືອຊາວກະສິກອນ ແລະ ບັນດາຜູ້ຜະລິດສະບຽງອາຫານທີ່ໄດ້ຮັບຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດຜ່ານການເພີ່ມທະວີແຫຼ່ງກຳລັງໜູນຊ່ວຍ, ພັດທະນາ, ຫັນພື້ນຖານໂຄງລ່າງ ແລະ ລະບົບການຫັນເປັນທັນສະໄໝ.

ເຫັນໄວ້ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ສາລະພັດວິທີແກ້ໄຂ ບັນຫາລົດຕິດ

ບັນຫາການຈະລາຈອນຕິດຂັດ ຫຼື ເວົ້າໃຫ້ເຂົ້າໃຈງ່າຍໆນັ້ນ ກໍຄືເລື່ອງລົດຕິດ ທີ່ເຮັດໃຫ້ເສັ້ນທາງ ໂດຍສະເພາະໃນບັນດາຕົວເມືອງໃຫຍ່ ຄັບຄັ່ງອັ່ງອໍຈົນຕຶງໂຕບໍ່ໄດ້. ບັນຫາທີ່ເວົ້ານີ້ ໄດ້ກາຍເປັນພະຍາດຊໍ້າເຮື້ອໃຫ້ຫຼາຍໆຕົວເມືອງໃຫ່ຍໃນທົ່ວໂລກ. ໃຜເຄີຍໄປບາງກອກ, ນະຄອນຫຼວງຂອງປະເທດໄທ ຕ່າງກໍເວົ້າເປັນສຽງດຽວກັນວ່າ ອຸກນໍາບັນຫາລົດຕິດ ແຕ່ຖ້າໄດ້ໄປນະຄອນຫຼວງຈາກາຕາ, ອິນໂດເນເຊຍແລ້ວ ສຽງຈົ່ມອຸກກໍຈະທະວີຄູນຂຶ້ນເປັນທົບເທົ່າ ບັນຫາການຈະລາຈອນຕິດຂັດ ໄດ້ກາຍເປັນເຫດຜົນໜຶ່ງ ທີ່ຊຸກຍູ້ໃຫ້ທາງການ **ອິນໂດເນເຊຍ** ຕັດສິນໃຈຍ້າຍນະຄອນຫຼວງໄປຢູ່ທີ່ອື່ນ ໂດຍຈະສ້າງໃຫ້ສໍາເລັດໂດຍພື້ນຖານໃນປີ 2024 ໜ້ານີ້.

ສ່ວນເຫດຜົນອື່ນໆທີ່ພາໃຫ້ຍ້າຍນະຄອນຫຼວງນັ້ນ ລວມມີເລື່ອງຄວາມແອອັດດ້ານທີ່ຢູ່ອາໄສ, ບັນຫາມົນລະພິດ (ກໍຈາກລົດນັ້ນລະ!) ບັນຫານໍ້າຖ້ວມຂັງ ແລະ ອື່ນໆ. ສໍາລັບມາດຕະການແກ້ໄຂບັນຫາລົດຕິດນັ້ນ, ອົງການປົກຄອງນະຄອນຫຼວງຈາກາຕາ ໄດ້ເຄີຍທົດລອງມາຫຼາຍວິທີແລ້ວ ແຕ່ຜົນຮັບນັ້ນບໍ່ຍືນຍົງເທົ່າທີ່ຄວນ. ເລີ່ມແຕ່ປີ 2016, ທາງການຂອງນະຄອນຫຼວງຈາກາຕາ ໄດ້ລິເລີ່ມມາດຕະການໃຫ້ແລ່ນລົດ ຕາມເລກທະບຽນ ຄີກ-ຄູ່ ໝາຍຄວາມວ່າໃຫ້ລົດທະບຽນເລກຄີກ-ຄູ່ ພາກັນແລ່ນຄົນລະມື້ ຕົວຢ່າງມື້ນີ້ລົດທະບຽນເລກຄູ່ອອກແລ່ນໄດ້, ມື້ຕໍ່ໄປແມ່ນອະນຸຍາດສໍາລັບລົດເລກຄີກ. ລະບົບນີ້ໄດ້ເຮັດທົດລອງຄັ້ງທໍາອິດ ແຕ່ວັນທີ 28 ກໍລະກົດ ຫາວັນທີ 28 ສິງຫາ 2016 ຕາມເສັ້ນທາງ 4 ສາຍ ທີ່ເນັ່ງແຕ່ເຂດເໜືອຫາເຂດໃຕ້ສຸດຂອງ ນະຄອນຫຼວງ. ທາງ 4 ສາຍນີ້ມີລົດທຽວຄັບຄາໜາແໜ້ນທີ່ສຸດ. ແຕ່ການແລ່ນລົດຕາມລະບົບ ເລກຄູ່-ຄີກນີ້ ກໍເຮັດໄດ້ໃນໄລຍະສັ້ນໆ ຍ້ອນມີສຽງຄັດຄ້ານວ່າ “ຄົນໄປວຽກທຸກວັນບໍ່ໄດ້ໄປຕາມເລກລົດຄູ່-ຄີກ!”. ອີກວິທີໜຶ່ງທີ່ທາງການນະຄອນຫຼວງໄດ້ທົດລອງນໍາໃຊ້ ກໍຄືໄດ້ອອກຂໍ້ກໍານົດໃຫ້ລົດແຕ່ລະຄັນທີ່ທຽວຕາມເສັ້ນທາງທີ່ແອອັດ ຕ້ອງມີຄົນນັ່ງຢູ່ໃນລົດຢ່າງໜ້ອຍ 3 ຄົນ, ບໍ່ຊັ້ນຈະຫ້າມທຽວ. ວິທີນີ້ໃນເບື້ອງຕົ້ນແມ່ນໄດ້ຮັບຜົນດີຄືໄດ້ເຮັດໃຫ້ຈໍານວນລົດໃນເສັ້ນທາງເປົ້າໝາຍຫຼຸດລົງ. ແຕ່ຕໍ່ມາພັດເກີດມີບັນຫາ ຄົນຫົວໃສຊອບຮັບຈ້າງ ເປັນບຸກຄົນທີ 3 ຂຶ້ນນັ່ງລົດ ແຕ່ພໍລົດແລ່ນຫວິດຕາຕໍາຫຼວດ ຈາລະຈອນແລ້ວ ຜູ້ກ່ຽວກໍ່ຕອຍຍອຍລົງລົດ ໂດຍໄດ້ຮັບເງິນຄ່າຈ້າງຈາກເຈົ້າຂອງລົດ. ນີ້ຄືວິທີທີ່ຕົບຕາຕໍາຫຼວດ ໃຫ້ເຫັນວ່າ ຢູ່ໃນລົດມີຄົນນັ່ງຢູ່ເຕັມ 3 ຄົນ!... ເປັນອັນວ່າວິທີນີ້ກໍໄປບໍ່ລອດ ແຕ່ກໍຕ້ອງຂໍຊົມເຊີຍອົງການປົກຄອງນະຄອນຫຼວງ ຈາກາຕາ ທີ່ໄດ້ມີຄວາມພະຍາຍາມຊອກວິທີໃໝ່ໆມາທົດລອງ ເພື່ອຜະເດັດເສິກກັບບັນຫາລົດຕິດ.

ຢູ່ນະຄອນຫຼວງນິວເດລີ, ປະເທດ **ອິນເດຍ** ນັ້ນ ບັນຫາລົດຕິດກໍ່ບໍ່ໄດ້ນ້ອຍໜ້າ ນະຄອນຫຼວງອື່ນໆໃນໂລກ. ອົງການປົກຄອງນະຄອນຫຼວງແຫ່ງນີ້ ເຄີຍໃຊ້ຫຼາຍວິທີ ເພື່ອແກ້ໄຂບັນຫາລົດຕິດ ແລະ ມົນລະພິດຈາກຄວັນລົດ ຄືເຄີຍຫ້າມລົດເກົ່າໆອອກແລ່ນເພາະສ່ຽງຈະເປ່ເພກາງທາງ ກາຍເປັນບັນຫາຂັດຂວາງການຈະລາຈອນ, ເຄີຍອອກຄໍາຮຽກຮ້ອງໃຫ້ຄົນທີ່ມີເປົ້າໝາຍໄປທາງດຽວກັນໃຊ້ລົດຮ່ວມກັນ, ເຄີຍຈໍາກັດລົດຈາກຕົວເມືອງອື່ນໆບໍ່ໃຫ້ແລ່ນເຂົ້ານະຄອນຫຼວງ. ຢູ່**ຫວຽດນາມ** ໂດຍສະເພາະຢູ່ຕົວເມືອງໃຫຍ່ໆນັ້ນ ທາງການໄດ້ຊຸກຍູ້ໃຫ້ລົດແທັກຊີ ໃຊ້ແອັບ (APP) ຊອກ ຫຼື ຕິດຕໍ່ຜູ້ໂດຍສານ ທັງນີ້ກໍເພື່ອບໍ່ໃຫ້ລົດແທັກຊີແລ່ນຊອກລູກຄ້າເອົາເອງຄືເມື່ອກ່ອນ ຊຶ່ງຈະເຮັດໃຫ້ລົດອັ່ງອໍຢູ່ຕາມເສັ້ນທາງ ຢູ່ນະຄອນຫຼວງ**ວຽງຈັນ** ກໍຄືໃນຕົວເມືອງໃຫຍ່ໆ, ບ້ານເຮົາຖ້າພັດທະນາລະບົບໂດຍສານສາທາລະນະໃຫ້ສະດວກສະບາຍໄປຄຽງຄູ່ກັບການນໍາໃຊ້ລົດແທັກຊີ-ລົດໂດຍສານ ລາຄາຖືກ ສະດວກ, ແນ່ນອນກໍຈະຊ່ວຍແກ້ໄຂບັນຫາລົດຕິດ ແລະ ມົນລະພິດໄດ້ແບບຍືນຍົງແລ.




## ແມ່ໃຈກິລາ

*# ບ່າວກະບື*

ບົນລົດໄຟຈາກນະຄອນຫຼວງລອນດອນສູ່ເມືອງແມັນເຊດສະເຕີ, ຄົນອາເມຣິກາ ເວົ້າດາດໃສ່ຄົນອັງກິດ ເຊິ່ງນັ່ງຕໍ່ໜ້າແຂົາໃນຕູ້ລົດ: "ພວກເຈົ້າຄົນອັງກິດທັ້ນຄັບແຄບຫຼາຍສະໄໝ ແລະ ແຍກປ່ຽວຕົນເອງຫຼາຍໂພດ. ເບິ່ງເຮົານີ້ແມ້... ໃນໂຕເຮົາ... ເຮົາມີເລືອດອີຕາລີ, ທັງເລືອດຝຣັ່ງ, ທັງເລືອດອິນເດຍໜ້ອຍໜຶ່ງແລະເລືອດຊູແອັດສ່ວນໜຶ່ງ. ເຫັນບໍ່ລະ... ວ່າຈັ່ງໃດ?" ຄົນອັງກິດຕອບວ່າ: "ແມ່ຂອງເຈົ້າ... ຈັ່ງແມ່ນຊາດລາວນໍ້າກິລາແທ້ບໍ່!"

## SPORTING MATHER

*# BAOKBU*

On a train from London to Manchester an American was telling off the Englishman sitting facing him in the comparbment "You English are too stuffy You set yourselves apart too much.Look at me... in me, i have Italian blood, French blood, a little Indian blood, and some Swedish blood What do you say to that ? "The Enghshman replied, "very sporting of yourmother? "




• ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈໍາກັດ
LUANG PRABANG POWER COMPANY LIMITED

ບໍລິສັດ ກຸ່ມດວງຈະເລີນ ພັດທະນາກໍ່ສ້າງ ຈໍາກັດຜູ້ດຽວ
DDC Group Sole Co.,Ltd
Douang Chaleurn Development Construction Group Sole Co.,Ltd

**ຜູ້ຊີ້ນໍາ :** ທ່ານ ສິງຄໍາ ວົງພະຈັນ
**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄໍາຫວັນ ດາລາວົງ
**ຄະນະບັນນາທິການ :** ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄໍາ ລໍຄໍາສອນ ຮອງ
**ກອງບັນນາທິການ :** ນາງ ກົງໃຈ ແສງອໍາພັນ; ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ
**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ

: www.na.gov.la; : ຂ່າວ “ຜູ້ແທນປະຊາຊົນ” Phouthen Pasaxon News; : Lao NA Media; APP: Lao NA.